JDB

ທະນາຄານຮ່ວມພັດທະນາ
Joint Development Bank

ບົດລາຍງານປະຈຳປີ 2023

ANNUAL REPORT 2023

“ເຕີບໃຫຍ່ໄປພ້ອມກັນ”
“BLOOMING TOGETHER”

JDB
ທະນາຄານຮ່ວມພັດທະນາ
Joint Development Bank

ສຳນັກງານໃຫຍ່ ທະນາຄານຮ່ວມພັດທະນາ
Head Quarter Location

ອາຄານເລກທີ 82, ຖະໜົນ ລ້ານຊ້າງ, Building No 82, Lanexang Ave
ບ້ານ ຫັດສະດີ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, Ban Hatsadee, Chanthabouly District, Vientiane Capital
ຕູ້ໄປສະນີ P.O. Box 3187 ໂທລະສັບ Tel: 021 - 213 531, ສາຍດ່ວນ Hotline 1499 ໂທລະສານ Fax: 021 - 213 530
Website: www.jdbbank.com.la
E-mail: info@jdbbank.la



JDB
ທະນາຄານຮ່ວມພັດທະນາ
Joint Development Bank

“ ເຕີບໃຫຍ່ໄປພ້ອມກັນ ”

“ BLOOMING TOGETHER ”

ສະມາຊິກສະພາບໍລິຫານ ທະນາຄານຮ່ວມພັດທະນາ

ສາລະບານ
CONTENT

1	ບົດຄວາມເຫັນຂອງ ປະທານສະພາຜູ້ບໍລິຫານ ທະນາຄານຮ່ວມພັດທະນາ (ທ່ານ ວິໄລ ສີພະພອນ) Speech of the Chairman of the Board of Director of Joint Development Bank (Mr. Vilay Siphaphone)	2
2	ບົດຄວາມເຫັນຂອງ ຜູ້ອຳນວຍການໃຫຍ່ ທະນາຄານຮ່ວມພັດທະນາ (ທ່ານ ສາຄອນ ຍໍພັນໄຊ) Speech of the Managing Director of Joint Development Bank (Mr. Sakhone Yorphanxay)	4
3	ຂໍ້ມູນດ້ານການເງິນໂດຍຫຍໍ້ Summary of Financial Infomation	7
4	ສະພາບໍລິຫານ ທະນາຄານຮ່ວມພັດທະນາ Board of Directors of The Joint Development Bank	9
5	ຄະນະອຳນວຍການ ທະນາຄານຮ່ວມພັດທະນາ Board of Management of the Joint Development Bank	10
6	ຄະນະກຳມະການ ຄຸ້ມຄອງບໍລິຫານ Strategy & Governance Committee	11
7	ຄະນະກຳມະການ ບໍລິຫານຄວາມສ່ຽງ Risk Management Committee	12
8	ຄະນະກຳມະການ ກວດສອບ Internal Inspection Committee	13
9	ໂຄງຮ່າງການຈັດຕັ້ງ ປະຈຳປີ 2023 Organization chart 2023	14
10	ບົດສະຫຼຸບການດຳເນີນທຸລະກິດ ປະຈຳປີ 2023 Business Operation Summary 2023	16
11	ການເຄື່ອນໄຫວ ປະຈຳປີ 2023 ຂອງທະນາຄານຮ່ວມພັດທະນາ Activities of Joint Development Bank	22
12	ບົດລາຍງານຂອງນັກກວດສອບອິດສະຫຼະ Report of Independent Auditor (Laos and English)	27
13	ໜ່ວຍບໍລິການຕ່າງໆ Service Units	98

ທ່ານ ເອກະພັນ ພະພິທັກ

MR. EKAPHAN PHAPHITHACK

ປະທານຜູ້ຖືຮຸ້ນ

The Chairman of Shareholders

JDB

ທະນາຄານຮ່ວມພັດທະນາ

Joint Development Bank

JDB
ທະນາຄານຮ່ວມພັດທະນາ
Joint Development Bank

ບົດປະກອບຄຳເຫັນ

Speech of Mr. Vilay Siphaphone

Chairman, Board of Directors Joint Development Bank.

ທ່ານ ວິໄລ ສີພະພອນ

Mr. Vilay Siphaphone

ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ

Chairman, Board of Directors
Joint Development Bank.

" ຂ້າພະເຈົ້າໃນນາມ ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ ຫຼື JDB ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງ ບັນດາລູກຄ້າທຸກທ່ານທີ່ໄວ້ວາງใจ ໃນການໃຊ້ບໍລິການດ້ວຍຄວາມປະທັບໃຈ ແລະ ຂອບໃຈ ນຳຜູ້ບໍລິຫານລະດັບສູງ ຕະຫຼອດເຖິງພະນັກງານ ທຸກຄົນ ທີ່ໄດ້ທຸ້ມເທແຮງກາຍ, ແຮງໃຈ ໃນການປະຕິບັດໜ້າທີ່ວຽກງານຂອງຕົນຢ່າງຫ້າວຫັນ. "

" As the Chairman of the Board of Directors of Joint Development Bank or JDB, I would like to express my sincere gratitude to all customers for your trust and satisfaction in Joint Development Bank's banking services, and a great appreciation to JDB's management and employees for your dedications and inspiration on your active performances. "

ໃນປີ 2023 ເຖິງວ່າສະພາບເສດຖະກິດຂອງໂລກ ມີການຜັນແປຢ່າງສັບສົນ, ບວກກັບສະພາບຂໍ້ຂັດແຍ່ງ ທາງດ້ານພູມີສາດການເມືອງ ແລະ ການທະຫານ ລະຫວ່າງ ປະເທດເສດຖະກິດໃຫຍ່ຂອງໂລກ ໄດ້ສົ່ງຜົນກະທົບຕໍ່ລາຄາພະລັງງານ ແລະ ສະບຽງອາຫານ ເພີ່ມຂຶ້ນເປັນຫຼາຍເທົ່າຕົວ. ນອກນັ້ນ, ການປັບຂຶ້ນອັດຕາດອກເບ້ຍຂອງທະນາຄານກາງໃນຫຼາຍໆປະເທດເພື່ອຮັບມືກັບການເພີ່ມຂຶ້ນຂອງອັດຕາເງິນເຟີ້ມ, ໄດ້ສົ່ງຜົນໃຫ້ເສດຖະກິດໂລກມີການສະລໍຕົວຂະຫຍາຍຕົວຢູ່ໃນລະດັບຕ່ຳ,ໂດຍສະເພາະເສດຖະກິດຂອງ ສປປ ລາວ ແມ່ນໄດ້ດຳເນີນໃນສະພາບຫຍຸ້ງຍາກ ເນື່ອງຈາກຫຼາຍປັດໃຈ ທີ່ທ້າທາຍທັງພາຍໃນ ແລະ ຕ່າງປະເທດເປັນຕົ້ນການເພີ່ມຂຶ້ນຢ່າງກ້າວກະໂດດຂອງອັດຕາເງິນເຟີ້ຂອງຫຼາຍປະເທດທົ່ວໂລກ, ເສດຖະກິດພາຍໃນປະເທດຍັງມີຄວາມອ່ອນໄຫວຈາກການເພິ່ງພາການນຳເຂົ້າສິນຄ້າ,ພັນທະຕໍ່ການຊຳລະໜີ້ສິນຕໍ່ຕ່າງປະເທດທີ່ຢູ່ໃນລະດັບສູງແລະການສະໜອງເງິນຕາຕ່າງປະເທດຂອງລະບົບທະນາຄານຍັງບໍ່ສົມດຸນກັບຄວາມຕ້ອງການໄດ້ກາຍເປັນແຮງກົດດັນຕໍ່ການອອ່ນຄ່າຂອງສະກຸນເງິນກີບທຽບກັບເງິນຕາຕ່າງປະເທດ.

ເຖິງຢ່າງໃດກໍຕາມ ຂ້າພະເຈົ້າ ກໍໄດ້ຕັດສິນໃຈສູງສຸດດ້ວຍການຫັນວິກິດໃຫ້ເປັນໂອກາດເພື້ອບັນລຸຜົນສຳເລັດຮ່ວມກັນເຮັດໃຫ້ທະນາຄານຮ່ວມພັດທະນາ ສາມາດປະຕິບັດຕົວເລກທີ່ຕັ້ງໄວ້ໄດ້ລື່ນຄາດໝາຍຢ່າງໜ້າເພິ່ງພໍໃຈ .

- ນອກຈາກນີ້ ຍັງໄດ້ລະດົມເງິນຝາກຈາກລູກຄ້າບຸກຄົນ ແລະ ນິຕິບຸກຄົນ.

- ສຳລັບການນຳໃຊ້ແຫຼ່ງທຶນຕ່າງໆ: ໄດ້ປ່ອຍສິນເຊື່ອເຂົ້າໃນການພັດທະນາເສດຖະກິດສັງຄົມກໍຄືການກໍ່ສ້າງພື້ນຖານໂຄງລ່າງຂອງປະເທດ ໄດ້ສົ່ງເສີມການຜະລິດດ້ານກະສິກຳໃຫ້ເປັນສິນຄ້າ ແລະ ໄດ້ມີການຄືນກຳໄລໃຫ້ລູກຄ້າ ເຊິ່ງທັງໝົດນີ້ກໍແມ່ນການກ້າຕັດສິນໃຈຂອງຜູ້ບໍລິຫານທະນາຄານຮ່ວມພັດທະນາເພື່ອສົ່ງເສີມເສດຖະກິດຂອງລາວໃຫ້ມີຄວາມເຂັ້ມແຂງ ເຊິ່ງເຮັດໃຫ້ລູກຄ້າມີຄວາມເຊື່ອໝັ້ນ, ໄວ້ວາງໃຈ ແລະ ໃຫ້ການສະໜັບສະໜູນ ທະນາຄານຮ່ວມພັດທະນາ ຕະຫຼອດມາ. ທະນາຄານຮ່ວມພັດທະນາໄດ້ພັດທະນາລະບົບເຄື່ອງມືຊຳລະພາຍໃນ ແລະ ຕ່າງປະເທດໃຫ້ທັນສະໄໝ, ຮັບປະ ກັນຄວາມປອດໄພ, ໄດ້ກະຈາຍຂໍ້ມູນຂ່າວສານໃຫ້ສັງຄົມໄດ້ຮັບຢ່າງເປັນປະຈຳ ແລະ ລູກຄ້າມານຳໃຊ້ບໍລິການທະນາຄານຮ່ວມພັດທະນານັບມື້ນັບຫລາຍຂຶ້ນ

ທ້າຍສຸດນີ້ ຂ້າພະເຈົ້າຂໍອວຍໄຊໃຫ້ພອນແດ່ການນຳ ພັກ-ລັດ, ນັກທຸລະກິດພາຍໃນແລະຕ່າງປະເທດ,ລູກຄ້າຂອງທະນາຄານຮ່ວມພັດທະນາ ທຸກທ່ານ ລວມທັງຜູ້ບໍລິຫານ ແລະ ພະນັກງານທັງໝົດທົ່ວປະເທດ ຈົ່ງມີສຸຂະພາບແຂງແຮງ,ມີອາຍຸໝັ້ນຍືນຍາວມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານ ແລະ ມີຄວາມຜາສຸກຢູ່ໃນຊີວິດ ຂອງທ່ານ ຕະຫຼອດໄປ.

The global economic uncertainties coupled with geo-political tensions and conflicts among the world's largest economies in 2023 significantly raised energy and foodstuff prices. Furthermore, increased interest rates by a number of central banks globally to cope with rising inflation led to an economic slowdown and low growth in a number of economies. The economy of Lao PDR in particular encountered a number of difficulties owing to external and internal factors such as, a sharp rise of inflation in a number of economies globally, Lao economy's high dependency and sensitiveness to imports, significant public debt servicing obligations, and shortage of foreign exchange significantly contributing to Lao Kip depreciation.

Nonetheless, I made a decisive call in turning a crisis to an opportunity for our joint successes resulting in Joint Development Bank's satisfactory outperformance of its targets.

- In addition, JDB was successful in mobilizing more deposits from its retail and corporate customers.

- On lending: JDB had continued lending to the socio-economic development activities such as infrastructure development and commercialized agricultural production projects as well as rewarding customers. These were made possible because of the brave decisions by JDB's management to contribute to a stronger Lao economy, and further enhance customers' confidence, trust and engagement with Joint Development Bank.

Furthermore, Joint Development Bank has modernized its secure domestic and international payment tools and services, and made a disclosure on a regular basis resulting in a gradual increase of customers using JDB's services.

In closing, I would like to wish our Party-State's leaders, local and foreign business people, our Joint Development Bank's customers, management, and all employees nationwide good health, longevity, and successes in your noble tasks and happiness in your personal life.

ປະທານສະພາບໍລິຫານທະນາຄານຮ່ວມພັດທະນາ
ທ່ານ ວິໄລ ສີພະພອນ

Chairman, Board of Directors Joint Development Bank
Mr. Vilay Siphaphone

JDB
ທະນາຄານຮ່ວມພັດທະນາ
Joint Development Bank

ທ່ານ ສາຄອນ ຍໍພັນໄຊ
Mr. Sakhone Yorphanxay

ຜູ້ອຳນວຍການໃຫຍ່ ທະນາຄານຮ່ວມພັດທະນາ.
Managing Director

" ໃນປີ 2023 ຜ່ານມາ, ເສດຖະກິດ ສປປ ລາວ ມີທ່າຂະຫຍາຍຕົວດີຂຶ້ນ ຍ້ອນມີການເປີດປະເທດ, ສະພາບເສດຖະກິດພາຍໃນກໍຄ່ອຍໆມີທ່າອ່ຽງດີຂຶ້ນ, ຍ້ອນການເອົາໃຈໃສ່ຂອງລັດຖະບານ ແຕ່ກໍຍັງປະເຊີນກັບສະພາບຄວາມບໍ່ແນ່ນອນຂອງເສດຖະກິດໂລກ ທີ່ມີຂໍ້ຂັດແຍ່ງ ແລະ ການແຂ່ງຂັນ ທາງດ້ານເສດຖະກິດ ການເມືອງ ຂອງບັນດາປະເທດເສດຖະກິດໃຫຍ່, ສະພາບອັດຕາເງິນເຟີ້ເພີ່ມຂຶ້ນ ເສດຖະກິດຂະຫຍາຍຕົວຢູ່ໃນລະດັບ 4,2%. "ປະຕິບັດຕາມນະ�โยบายเสดถะกิดมะหาพาภทางด้านการเงิน, อาละแห่งชาด อ่าด้อยการแก้ไขถอามหยุ้งยาก ทางด้านเสดถะกิด-การเงิน, การเปิดเส้นทางลิดไฟลาอ-จิน, ถงงถู่กับ การเปิดปะเทดของ สป จิน ที่เป็นกำลัง ใหย่ของ สปป ลาอ ซุกยู้ให้เสดถะกิด ສປປ ລາວ ສາມາດຂະຫຍາຍຕົວ.

In 2023, the economy of Lao PDR started to recover because of the country's reopening. The domestic economic condition gradually improved due to the Government's focused economic recovery measures. The economic growth was 4.2% in spite of the global economic uncertainties exacerbated by geo-political tensions and conflicts among the world's largest economies, and rising inflation globally.

ຂ້າພະເຈົ້າ ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກປະທານຜູ້ຖືຮຸ້ນ ແຕ່ງຕັ້ງໃຫ້ຂ້າພະເຈົ້າ ເປັນຜູ້ອຳນວຍການໃຫຍ່ ຂອງ ທະນາຄານ ຮ່ວມພັດທະນາເພື່ອປະຕິບັດຕາມແຜນຍຸດທະສາດ ແລະ ແຜນການດຳເນີນທຸລະກິດປະຈຳປີໃຫ້ປະກົດຜົນເປັນຈິງ ແລະ ເພື່ອບຸກທະລຸເປົ້າໝາຍຂອງການປະຕິບັດຕົວເລກ KPI ຂອງທຸກຂະແໜງການທຸລະກິດ ທີ່ສ້າງລາຍຮັບ ແລະ ຜົນກຳໄລແກ່ທະນາຄານ JDB. ໃນສົກປີ 2023 ເຫັນວ່າປະຕິບັດໄດ້ລື່ນແຜນການ ທີ່ວາງໄວ້ຢ່າງກ້າວກະໂດດ ເປັນທີ່ເພິ່ງພໍໃຈຂອງຄະນະຜູ້ບໍລິຫານ ແລະ ພະນັກງານທຸກຄົນ ພາຍໃນທະນາຄານຮ່ວມພັດທະນາ.

ທະນາຄານຮ່ວມພັດທະນາ JDB ເປັນທະນາຄານທຸລະກິດເອກະຊົນລາວ ທີ່ຢູ່ໃນແຖວໜ້າຂອງບັນດາທະນາຄານທຸລະກິດໃນ ສປປ ລາວ ແລະ ໄດ້ມຸ້ງໝັ້ນພັດທະນາການບໍລິການທີ່ເປັນເລີດ, ວ່ອງໄວ ແລະ ທັນສະໄໝ ເຊື່ອມຕໍ່ກັບສາກົນ ຖືເອົາຄວາມຕ້ອງການຂອງລູກຄ້າເປັນຫຼັກ,ພັດທະນາຜະລິດຕະພັນທາງການເງິນໃໝ່ຢ່າງສະໝ່ຳສະເໝີ ດ້ວຍລະບົບເທັກໂນໂລຍີທີ່ທັນສະໄໝປະສານກັບການບໍລິການທີ່ໂດດເດັ່ນຂອງພະນັກງານ,ການດຳເນີນທຸລະກິດຂອງທະນາຄານຮ່ວມພັດທະນາ ຫຼື JDB ໃນປີ 2023 ທີ່ຜ່ານມາສາມາດປະຕິບັດ ໄດ້ລື່ນຄາດໝາຍທີ່ວາງໄວ້ຄື: ຍອດຊັບສິນກວມເອົາ 146,09% ທຽບໃສ່ປີ 2022, ຍອດເງິນຝາກກວມເອົາ 151,37%, ທຽບໃສ່ປີ 2022, ຍອດສິນເຊື່ອກວມເອົາ 137,44% ທຽບໃສ່ປີ 2022, ໄດ້ນຳໃຊ້ແຫຼ່ງທຶນປ່ອຍສິນເຊື່ອບໍ່ເກີນ 75% ຂອງແຫຼ່ງທຶນ, ສ້າງກຳໄລຫລັງອາກອນກຳໄລເພີ່ມຂຶ້ນ 165,33% ແລະ ໄດ້ມອບພັນທະອາກອນໃຫ້ກະຊວງການເງິນ ຈຳນວນ 146,999,588,444,00 ກີບ.

ປະຈຸບັນທະນາຄານຮ່ວມພັດທະນາ ຫຼື JDB ມີ 1 ສູນບໍລິການທີ່ສຳນັກງານໃຫຍ່ ແລະ 64 ໜ່ວຍບໍລິການ ໃນທົ່ວປະເທດ, ມີຕູ້ ATM ຈຳນວນ 225 ຕູ້, ສາມາດໃຫ້ບໍລິການຖອນເງິນສົດຜ່ານບັດ ATM ຕ່າງທະນາຄານ ພາຍໃນແລະ ສາກົນ, ບໍລິການ Digital Banking ເປັນໜຶ່ງບໍລິການທີ່ໂດດເດັ່ນ ຂອງທະນາຄານ ຄື: JDB yes Mobile Banking ທະນາຄານໃນມືຖື ໃຫ້ບໍລິການບັນຊີບຸກຄົນທົ່ວໄປ ແລະ ບັນຊີທຸລະກິດ, ສາມາດບໍລິການ ແລະ ຈັດການ ການເງິນຂອງຕົນໄດ້ຢ່າງວ່ອງໄວ, ສະດວກ ແລະ ປອດໄພ, JDB Online Banking ເປັນບໍລິການທີ່ໄດ້ພັດທະນາຂຶ້ນໃຫ້ລູກຄ້າທີ່ເປັນອົງກອນ ນຳໃຊ້ເພື່ອບໍລິຫານຈັດການດ້ານການເງິນຂອງອົງກອນເຊັ່ນ: ໂອນເງິນພາຍໃນ ແລະ ຕ່າງປະເທດ, ຊຳລະສະສາງຄ່າສິນຄ້າຕ່າງໆ, ຊຳລະພັນທະອາກອນ, ຈ່າຍເງິນເດືອນພະນັກງານ ແລະ ບໍລິການອື່ນໆ ຜ່ານ JDB Online Banking. ປະຈຸບັນມີຮ້ານຄ້າ, ຮ້ານສະດວກຊື້, ຮ້ານອາຫານ, ໂຮງແຮມ, ທຸລະກິດບໍລິການຕ່າງໆ ຫຼາຍກວ່າ 15,000 ຮ້ານຄ້າ ໃນຂອບເຂດທົ່ວປະເທດ ນຳໃຊ້ Yes Pay Lao QR ແລະ ທະນາຄານຮ່ວມພັດທະນາ ສາມາດໂອນເງິນໄປຕ່າງປະເທດ ໄດ້ຫຼາຍກວ່າ 110 ປະເທດ ໃນທົ່ວໂລກ.

ທະນາຄານຮ່ວມພັດທະນາ ໄດ້ໃຫ້ບໍລິການລະບົບຊຳລະສະສາງ ທີ່ເອີ້ນວ່າ JDB Payment Platform ຕັ້ງແຕ່ປີ 2022 ເພື່ມຄວາມສະດວກສະບາຍໃຫ້ແກ່ບັນດາຮ້ານຄ້າທຸລະກິດຂະໜາດນ້ອຍແລະ ໃຫຍ່ ເພື່ອເຊື່ອມຕໍ່ ແລະ ຮອງຮັບທຸລະກຳ ການຊຳລະສິນຄ້າຕ່າງໆຜ່ານລະບົບຂອງຮ້ານຄ້າ, ໂດຍອີງຕາມທ່າແຮງການຂະຫຍາຍຕົວກັບບັນດາລູກຄ້າຕ່າງປະເທດຂອງບັນດາຮ້ານຄ້າທຸລະກິດ ກໍຄືການຊຳລະສະສາງຜ່ານບັດສາກົນຕ່າງໆເຊັ່ນ: Visa, MasterCard, UnionPay ເຊິ່ງມີຖານລູກຄ້າຂະໜາດໃຫຍ່ທົ່ວໂລກ, ລະບົບ JDB Payment Platform ແມ່ນມີລະບົບຮັບປະກັນຄວາມປອດໄພ 3D Securityທີ່ໄດ້ຮັບການຍອມຮັບຈາກສາກົນ.

" ຂ້າພະເຈົ້າຂໍຕາງໜ້າໃຫ້ແກ່ຄະນະຜູ້ບໍລິຫານພ້ອມດ້ວຍພະນັກງານທຸກຄົນ
ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງ ຂໍອວຍພອນໄຊອັນປະເສີດ
ໃຫ້ແກ່ລູກຄ້າທີ່ມາໃຊ້ບໍລິການທຸກໆ
ທ່ານຈົ່ງປະສົບຜົນສຳເລັດຕໍ່ໜ້າທີ່ການງານຂອງທ່ານປາສະຈາກ
ພະຍາດໂລຄາ ແລະ ສຸຂະພາບແຂງແຮງດີ. "

The Government's efforts to address the economic and financial difficulties as a part of the national agenda implementation, the operation of Lao-China railway coupled with the reopening of China's economy, a major trading partner of Lao PDR, were the driving forces of the economic growth of Lao PDR.

It was an honor for me to be entrusted by the Shareholders' Chairman to take a position of the General Managing Director of JDB to undertake a successful implementation of JDB's strategy and annual business plan needs to succeed, and achieve KPIs in all income and profit seeking business endeavors. 2023 marked JBD's outperformances of its targets at the satisfaction of the management and employees.

JDB is one of the leading commercial banks in Lao PDR, and committed to provide excellent, swift, modern, and internationally integrated banking services. JDB provides customer-oriented banking services, and consistently develops its financial products by leveraging new technologies and outstanding customer supports. Some key achievements in 2023 compared to 2022 include, 146.09% increase in total assets, 151.37% increase in total deposits, 137.44% increase in total credits, total lending not exceeding 75% of the funding sources, 65.33% increase of the profit after tax, and the total tax payment of 146,999,588,444,00 kip to Ministry of Finance.

At present, Joint Development Bank or JDB has 1 HQ Service Center at its headquarters and 64 service units nationwide, 225 ATMs offering cash withdrawal for other domestic and international banks' ATM cards, and a digital banking service. JDB's one of the outstanding banking services is JDB Yes Mobile banking available for both retail and corporate customers enabling them to manage their finances in a speedy, convenient and secure manner. In addition, JDB Online Banking is a product for corporate clients to better support their financial management and transactions such as domestic and international wire transfers, and payments of goods, taxes, wages among others.

Furthermore, there are over 15,000 vendors including shops, convenient stores, restaurants, hotels and other businesses using Yes Pay Lao QR. JDB also offers wire transfers to over 110 countries worldwide.

Joint Development Bank has offered a payment system called JDB Payment Platform since 2022 to facilitate small and large businesses' transactions. Besides, given local businesses' increased number of foreign customers, JDB facilitates the international payment by major card issuers such as, Visa, MasterCard, and UnionPay that have a large customer base worldwide. In addition, JDB Payment Platform has the internationally recognized 3D Security system.

On behalf of the management and all employees, I would like to express my sincere gratitude and best wishes to all of our customers for banking with us, great success in your noble tasks, illness-free and best of health.

ຜູ້ອຳນວຍການໃຫຍ່ ທະນາຄານຮ່ວມພັດທະນາ
ທ່ານ ສາຄອນ ຍໍພັນໄຊ
Managing Director Joint Development Bank
Mr. Sakhone Yorphanxay

Financial Highlight

Mio LAK

	2015	2016	2017	2018	2019	2020	2021	2022	2023
Asset	1,613,295	2,356,382	2,889,413	3,632,186	5,018,043	7,679,049	10,970,251	17,649,864	26,083,248
Deposit to customers	1,125,293	1,873,694	2,356,742	2,925,232	4,240,095	5,945,355	8,727,580	14,140,149	21,867,163
Loan	782,067	1,272,882	1,913,425	2,190,461	3,314,709	4,595,516	7,566,039	11,977,808	16,637,986



	2015	2016	2017	2018	2019	2020	2021	2022	2023
Revenues	162,523	230,949	308,455	278,890	356,325	505,037	726,306	1,308,655	2,047,797
Expenses	159,370	225,784	302,177	271,052	316,663	419,353	592,116	1,027,226	1,537,494
Profit	3,143	5,166	6,278	7,838	39,662	85,684	134,190	281,429	510,303



“ ເຕີບໃຫຍ່ໄປພ້ອມກັນ ”

“ BLOOMING TOGETHER ”

ຄະນະອຳນວຍການ ທະນາຄານຮ່ວມພັດທະນາ

ສະພາບໍລິຫານ ທະນາຄານຮ່ວມພັດທະນາ
Board of Directors of The Joint Development Bank

ທ່ານ ວິໄລ ສີພະພອນ
Mr. Vilay SIPHAPHONE
ປະທານສະພາບໍລິຫານ
Chairman of The Board of Directors

ທ່ານ ນາງ ພອນສະໄໝ ສຸກຂະຜົນ
Ms. Phonesamay SOUKHAPHON
ຮອງປະທານ ສະພາບໍລິຫານ
Vice Chairman of Board of Directors

ທ່ານ ສາຄອນ ຍໍພັນໄຊ
Mr. Sakhone YORPHANXAY
ສະມາຊິກ ສະພາບໍລິຫານ
Executive Board Member

ທ່ານ ຄຳສິງ ສອນສິນນະວົງ
Mr. Khamsing SONESINNAVONG
ສະມາຊິກ ສະພາບໍລິຫານ
Executive Board Member

ທ່ານ ວິລັນເດດ ໄວຍະສົມສັກ
Mr. Vilandeth VAYASOMSAK
ສະມາຊິກ ສະພາບໍລິຫານ
Executive Board Member

ທ່ານ ຈັນທະພອນ ຈັນທະວົງ
Ms. Chanthaphone CHANTHAVONG
ສະມາຊິກ ສະພາບໍລິຫານ
Executive Board Member

ທ່ານ ບຸນຊຸ່ມ ສີສະຫວັດ
Mr. Bounsoum SYSAVAT
ສະມາຊິກ ສະພາບໍລິຫານ
Executive Board Member

ຄະນະອຳນວຍການ ທະນາຄານຮ່ວມພັດທະນາ
Board of Management of the Joint Development Bank

ທ່ານ ສາຄອນ ຍໍພັນໄຊ
Mr. Sakhone YORPHANXAY
ຜູ້ອຳນວຍການໃຫ່ຍ
Managing Director

ທ່ານ ຄຳສິງ ສອນສິນນະວົງ
Mr. Khamsing SONESINNAVONG
ຮອງອຳນວຍການ
Deputy Director

ທ່ານ ວິລັນເດດ ໄວຍະສົມສັກ
Mr. Vilandeth VAYASOMSAK
ຮອງອຳນວຍການ
Deputy Director

ທ່ານ ຈັນຊະນະ ສິງຫາວົງ
Mr. Chansana SINGHAVONG
ຮອງອຳນວຍການ
Deputy Director

ທ່ານ ຄຳຊຸ ຢ່າງ
Mr. Khamsu YANG
ຮອງອຳນວຍການ
Deputy Director

ທ່ານ ຈັນທະພອນ ຈັນທະວົງ
Mr. Chanthaphone CHANTHAVONG
ຮອງອຳນວຍການ
Deputy Director

ຄະນະກຳມະການ ຄຸ້ມຄອງບໍລິຫານ
Strategy & Governance Committee

ທ່ານ ຈັນທະພອນ ຈັນທະວົງ
Mr. Chanthaphone CHANTHAVONG
ປະທານຄະນະກຳມະການຄຸ້ມຄອງບໍລິຫານ
Head of Committee

ທ່ານ ວິລັນເດດ ໄວຍະສົມສັກ
Mr. Vilandeth VAYASOMSAK
ຮອງປະທານຄະນະກຳມະການຄຸ້ມຄອງບໍລິຫານ
Deputy Head of Committee

ທ່ານ ນາງ ພອນສະໄໝ ສຸຂະຜົນ
Ms. Phonesamay SOUKHAPHON
ກຳມະການ
Committee Member

ທ່ານ ໄຊ ບູລິມມະວົງ
Mr. Xay BOULOMMAVONG
ກຳມະການ
Committee Member

ທ່ານ ໄຊຊະນະ ທຳມະວົງສອນ
Mr. Xaysana THAMMAVONGSONE
ກຳມະການ
Committee Member

ຄະນະກຳມະການ ບໍລິຫານຄວາມສ່ຽງ
Risk Management Committee

ທ່ານ ຄຳສິງ ສອນສິນນະວົງ
Mr. Khamsing SONESINNAVONG
ປະທານຄະນະກຳມະການ ບໍລິຫານຄວາມສ່ຽງ
Head of Committee

ທ່ານ ຈັນຊະນະ ສິງຫາວົງ
Mr. Chansana SINGHAVONG
ຮອງປະທານຄະນະກຳມະການ ບໍລິຫານຄວາມສ່ຽງ
Deputy Head of Committee

ທ່ານ ວິໄລ ສີພະພອນ
Mr. Vilay SIPHAPHONE
ກຳມະການ
Committee Member

ທ່ານ ສາຄອນ ຍໍພັນໄຊ
Mr. Sakhone YORPHANXAY
ກຳມະການ
Committee Member

ທ່ານ ອານົນ ລ້ຽວເລງ
Mr. Arnon LIEYLENG
ກຳມະການ
Committee Member

ຄະນະກຳມະການ ກວດສອບ

Internal Inspection Committee

ທ່ານ ບຸນຊຸ່ມ ສີສະຫວັດ
Mr. Bounsoum SYSAVAT
ປະທານຄະນະກຳມະການ ກວດສອບ
Head of Committee

ທ່ານ ວິຊຸດ ບົວສີສະອາດ
Mr. Visoun BUASISAARD
ຮອງປະທານຄະນະກຳມະການ ກວດສອບ
Deputy Head of Committee

ທ່ານ ຈັນທະພອນ ຈັນທະວົງ
Mr. Chanthaphone CHANTHAVONG
ກຳມະການ
Committee Member

ທ່ານ ວິລັນເດດ ໄວຍະສົມສັກ
Mr. Vilandeth VAYASOMSAK
ກຳມະການ
Committee Member

ທ່ານ ນາງ ຄອນສະຫວັນ ວິຊາເທບ
Ms. Khonesavan VISATHEP
ກຳມະການ
Committee Member

ໂຄງຮ່າງການຈັດຕັ້ງ ທະນາຄານ ຮ່ວມພັດທະນາ



Organization chart Joint Development Bank (J.D.B) 2023



I ພາບລວມເສດຖະກິດຂອງ ສປປ ລາວ | Lao PDR Economic Overview

ໃນປີ 2023 ເສດຖະກິດຂອງ ສປປ ລາວ ໄດ້ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ສະເລ່ຍໃນລະດັບ 4,2 % ແຕ່ຫລຸດແຜນການວາງໄວ້ຢູ່ໃນລະດັບ 4,5%, ຍ້ອນການອ່ອນຄ່າຂອງເງິນກີບ,ລວມຍອດຜະລິດຕະພັນພາຍໃນ (GDP) ຕໍ່ຫົວຄົນມີທ່າອ່ຽງຫລຸດລົງ. (ແຜນການປີ 1.625 ໂດ ລາສະຫະລັດ ແລະ ແຜນການ 5ປີ 2.880 ໂດລາສະຫະລັດ) ແລະ ລວມຍອດລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນ, ສຳລັບການປະຕິບັດແຜນງົບປະມານລັດຖະບານ ໄດ້ສຸມໃສ່ປັບປຸງການຄຸ້ມຄອງລາຍຮັບ-ລາຍຈ່າຍດ້ວຍການປັບປຸງກົງຈັກການຈັດຕັ້ງ,ການປັບປຸງໂຄງສ້າງລາຍຮັບ-ລາຍຈ່າຍ, ສືບຕໍ່ຫັນເປັນທັນສະໄໝ ໃນວຽກງານຄຸ້ມຄອງການເງິນ-ງົບປະມານ ດ້ວຍການປະກອບເຄື່ອງມື ແລະ ພັດທະນາລະບົບຄຸ້ມຄອງ ແລະ ບໍລິການເປັນທັນສະໄໝ ອັນໄດ້ເຮັດວຽກງານໃນຂົງເຂດນີ້ມີການຫັນປ່ຽນຢ່າງກ້າວໜ້າກວ່າເກົ່າ ແລະ ເຮັດໃຫ້ລັດຖະບານສາມາດເກັບລາຍຮັບໄດ້ເກີນແຜນໃນ 2 .ປີ ຕິດຕໍ່ກັນ ແລະ ລັດຖະບານໄດ້ສືບຕໍ່ປະຕິບັດລາຍຈ່າຍງົບປະມານບົນຈິດໃຈປະຢັດຕາມດຳລັດ 205/ລບ, ວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ ຮັບປະກັນການເບີກຈ່າຍທີ່ຈຳເປັນໄດ້ຕາມປົກກະຕິເປັນຕົ້ນ:ເງິນເດືອນ, ເງິນນະໂຍບາຍ,ການຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ. ໃນປີງົບປະມານ 2021 ແລະ 2022 ສາມາດປະຢັດລາຍຈ່າຍຈຳນວນໜຶ່ງທີ່ບໍ່ຈຳເປັນເຊິ່ງໄດ້ເຮັດໃຫ້ມູນຄ່າການຂາດດຸນງົບປະມານມີທ່າອ່ຽງຫລຸດລົງ. ໄດ້ເອົາໃຈ ໃສ່ແກ້ໄຂໜີ້ສິນການລົງທຶນຂອງລັດ ແລະ ໜີ້ສິນຕ່າງປະເທດ ດ້ວຍມາດຕະການ ແລະ ວິທີການຕ່າງໆ ຢ່າງເປັນລະບົບ ແລະ ສາມາດປະຕິບັດໄດ້ຕາມ ແຜນທີ່ກຳນົດໄວ້ ແລະ ມີທ່າອ່ຽງດີຂຶ້ນເປັນກ້າວໆ ສາມາດຮັບປະກັນ ການຊຳລະໜີ້ສິນທີ່ຄົບກຳນົດໄດ້.

I. Lao PDR Economic Overview

In 2023, the economy of Lao PDR continued to grow at the average of 4.2%. However, it was lower than the projected 4.5% due to the depreciation of Lao Kip while the Gross Domestic Product (GDP) per capita was on a declining trend. (GDP per capital in the Government's 2023 annual socio-economic development plan and the 9th NSEDP are USD 1,625 and USD 2,880 respectively). With regards to the national budget execution, the Government prioritized a strengthening of the revenue and expenditure administration by structuring the concerned institutional arrangements, and continuously introducing ICT solutions in the public finance management. Consequently, the Government had outperformed its revenue targets for 2 consecutive years.

The Government still continued the implementation of the Decree 205/GOL on savings and frugality; thus, ensured a regular payment of essential expenses such as, wages, benefits, and domestic and foreign debt services. Besides, the savings carried over from 2021 and 2022 helped to ease the fiscal deficit. In addition, the Government introduced various measures to systematically address its capital investment debts and foreign debts, and was able to observe its public debt servicing schedule.

ສຳລັບການຮັກສາສະຖຽນລະພາບດ້ານເງິນຕາ ທະນາຄານແຫ່ງ ສປປ ລາວ ໄດ້ມີການຈັດຕັ້ງປະຕິບັດມາດຕະການຄືຢຶດໝັ້ນປະຕິບັດນະ�โยบายເງິນຕາແບບຮັດກຸມ ໂດຍນຳໃຊ້ທຸກເຄື່ອງມື ທີ່ທະນາຄານແຫ່ງ ສປປ ລາວ ມີ ຢ່າງປະສົມປະສານ ໃນການຄວບຄຸມປະລິມານເງິນ M2 ໃຫ້ຢູ່ໃນລະດັບເໝາະສົມ ແລະ ສາມາດຊຸກຍູ້ການຂະຫຍາຍ ຕົວຂອງເສດຖະກິດ; ດຳເນີນນະ�โยบายອັດຕາແລກປ່ຽນຕາມກົນໄກຕະຫລາດທີ່ມີການຄຸ້ມຄອງຂອງລັດ ໃນທິດທາງທີ່ມີຄວາມຍືດຍຸ່ນຫລາຍກວ່າເກົ່າ ແລະ ດັດສົມຄວາມຕ້ອງການ ເງິນຕາຕ່າງປະເທດ ໃຫ້ແກ່ສິນຄ້ານຳເຂົ້າບູລິມະສິດ;ດັດສົມບັນດາຮ້ານແລກປ່ຽນ ເງິນຕາຕ່າງປະເທດເອກະຊົນດ້ວຍການຍຸບເລີກ ແລະ ຫັນມາ ໃຫ້ລວມສູນ ຢູ່ນຳທະນາຄານທຸລະກິດພ້ອມທັງກວດກາການ ເຄື່ອນໄຫວຂອງກຸ່ມຄົນທີ່ສວຍໂອກາດແລກປ່ຽນ ແບບປັ່ນ ປວນອັດຕາແລກປ່ຽນ; ໄດ້ຊີ້ນຳໃຫ້ ທຫລ ແລະ ທຸກຂະແໜງ ການປັ່ນອ້ອມປັບປຸງບູລະນະການຄຸ້ມຄອງເງິນຕາຕ່າງປະເທດ ຢ່າງເປັນລະບົບຫລາຍຂຶ້ນ.ທີ່ພົ້ນເດັ່ນແມ່ນການປັບປຸງກົດ ໝາຍວ່າດ້ວຍການຄຸ້ມຄອງ ເງິນຕາຕ່າງປະເທດ ແລະ ອອກ ນິຕິກຳລຸ່ມກົດໝາຍຈຳນວນໜຶ່ງ ໂດຍສະເພາະໄດ້ອອກຄຳສັ່ງ ເລກທີ 10/ນຍ ທີ່ກຳນົດໃຫ້ທຸກຂະແໜງການຕ້ອງປະຕິບັດ ລະບຽບ ການຄຸ້ມຄອງການນຳເຂົ້າ-ສົ່ງອອກ, ການລົງທຶນ ໂດຍກົງຈາກຕ່າງປະເທດ ແລະ ການກູ້ຢືມຈາກຕ່າງປະເທດ ແນໃສ່ຄຸ້ມຄອງໃຫ້ກະແສເງິນຕາຕ່າງປະເທດ ເຂົ້າສູ່ລະບົບ ທະນາຄານໃຫ້ຫລາຍຂຶ້ນ.ຄຽງຄູ່ກັບການສົ່ງເສີມການນຳໃຊ້ ເງິນສະກຸນທ້ອງຖິ່ນເພື່ອສົ່ງເສີມການຊຳລະສະສາງເຂົ້າໃນກິດ ຈະກຳການຄ້າ-ການບໍລິການ ແລະ ການລົງທຶນລະຫວ່າງ ສປປ ລາວ ກັບຕ່າງປະເທດ. ຊ່ວຍຫລຸດຜ່ອນການເໜັງຕີງ ຂອງອັດຕາແລກປ່ຽນ ບໍ່ໃຫ້ຜັນຜວນໜັກໜ່ວງ ແລະ ທັງ ເປັນການຊ່ວຍໃຫ້ອັດຕາເງິນເຟີ້ຫລຸດລົງຈາກລະດັບ 40% ໃນກາງປີ 2022 ມາເປັນ 25,69% ໃນເດືອນ 9/2023. ແຕ່ເຖິງຢ່າງໃດກໍຕາມ,ໃນຕົວຈິງລາຄາສິນຄ້າໃນທ້ອງຕະ ຫລາດຍັງສູງ ແລະ ອັດຕາແລກປ່ຽນຍັງມີຄວາມອ່ອນໄຫວ ຕໍ່ ຜົນກະທົບຂອງການປ່ຽນແປງສະພາບເສດຖະກິດໂລກ ແລະ ຍ້ອນຄວາມຕ້ອງການເງິນຕາຕ່າງປະເທດ ຢູ່ພາຍໃນປະເທດ ເຮົາຍັງສູງກວ່າຄວາມອາດສາມາດໃນການສະໜອງຈາກການ ນຳເຂົ້າ.

ສະນັ້ນ, ການແກ້ໄຂບັນຫາດັ່ງກ່າວນີ້ ທຸກພາກສ່ວນ, ຂະແໜງ ການນັບແຕ່ສູນກາງ, ທ້ອງຖິ່ນ ແລະ ນິຕິ ບຸກຄົນ-ບຸກຄົນ ທົ່ວສັງຄົມ ຕ້ອງເປັນເຈົ້າການຈັດຕັ້ງປະຕິບັດ ຮ່ວມກັນໃນການຫລຸດຜ່ອນຄວາມຕ້ອງການໃນການຊົມໃຊ້ເ ງິນຕາຕ່າງປະເທດທີ່ບໍ່ຈຳເປັນໃຫ້ຫລຸດລົງຢ່າງເປັນຮູບປະທຳ.

Pertaining to the monetary stability, The Bank of Lao PDR (BOL) fastened its monetary policy by utilizing all monetary tools to regulate M2 supply to best stimulate the economic growth, maintained its regulated exchange rate policy with more flexible band, and was able to supply foreign exchange for priority imports. Moreover, BOL moved to put exchange bureaus to operate under commercial banks, penalized non-formalized money exchangers, and strengthened foreign exchange management, notably an introduction of the law on foreign exchange management and relating sub-legislations such as, Prime Minister's Order 10/PM to better regulate the flow of foreign exchange in the form of foreign direct investments, and offshore borrowings through the banking sector. Furthermore, the use of the local currency was encouraged for the payments of goods and services, and local investments. These efforts eased the pressure on the exchange rate and helped to bring down the inflation from 40% in mid-2022 to 25.69% by September 2023. Nonetheless, prices of goods were still high, and the exchange rate fluctuation was still at a significant degree owing to the global economic uncertainties and a mis-match of foreign exchange supply and demand in the local economy to pay for imports.

Hence, to address the latter challenge, all authorities both at the national and sub-national levels, and natural and legal persons shall take a strong ownership to reduce an unnecessary demand for foreign exchange.

II ຜົນການດຳເນີນທຸລະກິດ ປະຈຳປີ 2023 | JDB's 2023 Business Performance

ໃນປີ 2023 ເສດຖະກິດ ສປປ ລາວ ມີທ່າຂະຫຍາຍຕົວດີຂຶ້ນ ສະພາບເສດຖະກິດພາຍໃນກໍຄ່ອຍໆມີທ່າອ່ຽງດີຂຶ້ນ,ຍ້ອນການເອົາໃຈໃສ່ຂອງລັດຖະບານ, ເຊິ່ງເປັນຜົນດີໃຫ້ແກ່ການດຳເນີນທຸລະກິດ ຂອງທະນາຄານຮ່ວມພັດທະນາ ຫຼື JDB ສາມາດປະຕິບັດໄດ້ລື່ນຄາດໝາຍທີ່ວາງໄວ້, ໃນປີ 2023 ທະນາຄານຮ່ວມພັດທະນາ ມີຍອດຊັບສິນເພີ້ມຂຶ້ນ 46% ທຽບໃສ່ ປີຜ່ານມາ, ຍອດເງິນຝາກ ເພີ່ມຂຶ້ນ51% , ຍອດສິນເຊື່ອ ເພີ່ມຂຶ້ນ 38% ເມື່ອທຽບໃສ່ ປີ 2022, ຜົນການດຳເນີນທຸລະກິດ ຂອງທະນາຄານຮ່ວມພັດທະນາ ປະຈຳປີ 2023 ມີຜົນກຳໄລກ່ອນອາກອນເພີ່ມຂຶ້ນ 61% ທຽບໃສ່ປີຜ່ານມາ.ໄດ້ນຳໃຊ້ແຫຼ່ງທຶນປ່ອຍສິນເຊື່ອບໍ່ເກີນ 75% ຂອງແຫຼ່ງທຶນ, ໄດ້ມອບພັນທະອາກອນໃຫ້ກະຊວງການເງິນຈຳນວນ 146,999,588,444,00 ກີບ, ແລະ ໄດ້ວາງແຜນການ KPI ປະຈຳປີ 2024 ຈະຕ້ອງ ຊອກຫາແຫຼ່ງລາຍຮັບເພີ່ມຈາກຜະລິດຕະພັນອື່ນໆ ທີ່ມີໃນປະຈຸບັນ.ການລະດົມແຫຼ່ງທຶນຕ້ອງຕິດພັນກັບການປ່ອຍເງິນກູ້,ຕິດພັນກັນກັບການເປີດບັນຊີເງິນຝາກຂອງລູກຄ້າແຕ່ລະລາຍທັງສຳນັກງານໃຫຍ່ ແລະ ໜ່ວຍບໍລິການ ຕາມແຜນ KPI ທີ່ວາງໄວ້.

In 2023, the economy of Lao PDR was on a recovery path because of the Government's focused economic measures. As a result, JDB enjoyed good a business performance by outperforming its established targets. JDB's 2023 business performance compared to 2022 showed 46% increase in total assets, 51% increase in total deposits, 38%

increase in total credits, 61% increase of the profit after tax, total lending not exceeding 75% of the funding sources, and the total tax payment of 146,999,588,444,00 kip to Ministry of Finance. The key KPI for 2024 is to generate additional incomes from other existing products. Besides that, a mobilization of funding sources must be matched with lending products, and customers' deposits both at the headquarters and its service units among other key KPIs for 2024.

III ທິດທາງປະຕິບັດແຜນການ KPI ປະຈຳປີ 2024 | 2024 KPI Implementation Outlook

ເພື່ອໃຫ້ບັນລຸເປົ້າໝາຍທີ່ວາງໄວ້ຮ່ວມກັນ ທະນາຄານຮ່ວມພັດທະນາ ເຫັນຄວາມສຳຄັນທຸກບາດກ້າວໃນການດຳເນີນທຸລະກິດ ດັ່ງນີ້:

- ສ້າງຄວາມສາມັກຄີຂອງພະນັກງານ ຕະຫຼອດເຖິງຄະນະຜູ້ບໍລິຫານລະດັບສູງ ຂອງທະນາຄານຮ່ວມພັດທະນາ
- ປະຕິບັດຂໍ້ຕົກລົງ ລະບຽບການຕ່າງໆຂອງທະນາຄານຮ່ວມພັດທະນາຢ່າງເຂັ້ມງວດ
- ຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານ ກໍ່ສ້າງພະນັກງານຂອງຕົນ ໃນການບໍລິການລູກຄ້າດ້ວຍໃຈ, ມີຈັນຍາບັນບໍລິການລູກຄ້າດ້ວຍຄວາມ ໂປ່ງໃສ
- ມີນະໂຍບາຍແກ້ໄຂຊີວິດການເປັນຢູ່ ຂອງພະນັກງານໃຫ້ດີຂຶ້ນເທື່ອລະກ້າວ.

ປະຈຸບັນທະນາຄານຮ່ວມພັດທະນາ ຫຼື JDB ມີ 1 ສູນບໍລິການທີ່ສຳນັກງານໃຫຍ່ ແລະ 64 ໜ່ວຍບໍລິການ ໃນທົ່ວປະເທດ, ມີຕູ້ ATM ຈຳນວນ 225 ຕູ້, ສາມາດໃຫ້ບໍລິການຖອນເງິນສົດຜ່ານບັດ ATM ຕ່າງທະນາຄານ ພາຍໃນແລະ ສາກົນ, ບໍລິການ Digital Banking ເປັນໜຶ່ງບໍລິການທີ່ໂດດເດັ່ນ ຂອງທະນາຄານ ຄື: JDB yes Mobile Banking ທະນາຄານໃນມືຖື ໃຫ້ບໍລິການບັນຊີບຸກຄົນທົ່ວໄປ ແລະ ບັນຊີທຸລະກິດ, ສາມາດບໍລິການ ແລະ ຈັດການ ການເງິນຂອງຕົນໄດ້ຢ່າງວ່ອງໄວ, ສະດວກ ແລະ ປອດໄພ, JDB Online Banking ເປັນບໍລິການທີ່ໄດ້ພັດທະນາຂຶ້ນ ໃຫ້ລູກຄ້າທີ່ເປັນອົງກອນ ນຳໃຊ້ເພື່ອບໍລິຫານຈັດການ ດ້ານການເງິນຂອງອົງກອນເຊັ່ນ: ໂອນເງິນພາຍໃນ ແລະ ຕ່າງປະເທດ, ຊຳລະສະສາງຄ່າສິນຄ້າຕ່າງໆ, ຊຳລະພັນທະອາກອນ, ຈ່າຍເງິນເດືອນພະນັກງານ ແລະ ບໍລິການອື່ນໆ ຜ່ານ JDB Online Banking.

ປະຈຸບັນມີຮ້ານຄ້າ, ຮ້ານສະດວກຊື້, ຮ້ານອາຫານ, ໂຮງແຮມ, ທຸລະກິດບໍລິການຕ່າງໆ ຫຼາຍກວ່າ 15,000 ຮ້ານຄ້າ ໃນຂອບເຂດທົ່ວປະເທດ ນຳໃຊ້ Yes Pay Lao QR ແລະ ທະນາຄານຮ່ວມພັດທະນາ ສາມາດໂອນເງິນໄປຕ່າງປະເທດ ໄດ້ຫຼາຍກວ່າ 110 ປະເທດ ໃນທົ່ວໂລກ.

ທະນາຄານຮ່ວມພັດທະນາ ບໍລິການດ້ານການເງິນແບບຄົບວົງຈອນ ເພີ່ມທາງເລືອກໃໝ່ໃຫ້ກັບລູກຄ້າຢູ່ພາຍໃນ ແລະ ຕ່າງປະເທດ ລູກຄ້າຄ້າສາມາດເລືອກໃຊ້ຜະລິດຕະພັນທີ່ເໝາະສົມ ແລະ ທັນສະໄໝ ຂອງທະນາຄານຮ່ວມພັດທະນາ, JDB ເປັນໜຶ່ງໃນສະມາຊິກຂອງ ບໍລິສັດ LAPNET ສາມາດໃຫ້ບໍລິການຖອນເງິນສົດຂ້າມທະນາຄານ ໄດ້ 16ທະນາ ຄານ, ບໍລິການຜະລິດຕະພັນ ບັດ UnionPay Debit, ບັດ UnionPay Credit Platinum, ບັດ VISA Debit, ບັດ VISA Credit Silver ແລະ ບັດVISA Credit Gold ທີ່ເປັນບັດ Chip ທັນສະໄໝ ແລະ ມີຄວາມປອດໄພສູງ ເຊິ່ງມີລູກຄ້ານຳໃຊ້ຢ່າງກວ້າງຂວາງ, ບໍລິການເຄື່ອງຮູດບັດ EDC ຮອງຮັບການຊຳລະສິນຄ້າ ແລະ ບໍລການດ້ວຍບັດພາຍໃນ ແລະ ບັດສາກົນ ຮອງຮັບການຊຳລະດ້ວຍ WechatPay ແລະ AliPay , ມີຄູ່ຮ່ວມທຸລະກິດ ແລະ ຮ້ານຄ້າທີ່ນຳໃຊ້ YesPay Lao QR ໃນຂອບເຂດທົ່ວປະເທດ ສາມາດຮັບຊຳລະໄດ້ທຸກທະນາຄານ.

ທະນາຄານຮ່ວມພັດທະນາ ມຸ້ງໝັ້ນ ບໍລິການທີ່ເປັນເລີດ, ວ່ອງໄວ ທັນສະໄໝ ເຊື່ອມຕໍ່ກັບສາກົນ ຖືເອົາຄວາມຕ້ອງການຂອງລູກຄ້າ ເປັນຫລັກ,ພັດທະນາຜະລິດຕະພັນທາງດ້ານການເງິນໃໝ່ຢ່າງສະໝ່ຳສະເໝີ ດ້ວຍເທັກໂນໂລຍີ ທີ່ທັນສະໄໝ ປະສານກັບການບໍລິການທີ່ໂດດເດັ່ນຂອງພະນັກງານ ສ້າງປະໂຫຍດສູງສຸດໃຫ້ກັບທຸກຝ່າຍ,ເປັນສ່ວນປະກອບທີ່ສຳຄັນ ໃນການພັດທະນາປະເທດຊາດໃຫ້ມີຄວາມຈະເລີນຮຸ່ງເຮືອງ. ໄປຕາມຄຳຂວັນຂອງ ທະນາຄານຮ່ວມພັດທະນາ (ເຕີບໃຫຍ່ໄປພ້ອມກັນ)

In order to achieve the collective goals, Joint Development Bank reckons the importance of every step in its business operation as follows:

- Cultivate a solidarity among employees and the management of Joint Development Bank;
- Strictly observe decisions and regulations of Joint Development Bank
- Enhance employees' knowledge and capacities, cultivate sincere, ethical, and transparent servicing culture among employees
- Have a policy in place to gradually improve employees' living standards.

At present, Joint Development Bank or JDB has 1 HQ Service Center at its headquarter and 64 Service Units nationwide, 225 ATMs offering cash withdrawal for other domestic and international banks' ATM cards, and a digital banking service. JDB's one of the outstanding banking services is JDB yes Mobile banking available for both retail and corporate customers enabling them to manage their finances in a speedy, convenient and secure manner. In addition, JDB Online Banking is a product for corporate clients to better support their financial management and transactions such as domestic and international wire transfers, and payments of goods, taxes, wages among others.

Furthermore, there are over 15,000 vendors including shops, convenient stores, restaurants, hotels and other businesses using Yes Pay Lao QR. JDB also offers wire transfers to over 110 countries worldwide.

Joint Development Bank offers comprehensive and more alternative financial products to both local and foreign customers enabling them to choose the appropriate and modern JDB's banking services that suits their needs. Besides, JDB is one of the 16 commercial bank members of Lao National Payment Network (LAPNet) that provides interbank fund transfer. JDB also offers card payment services with more secure chip cards such as, UnionPay Debit, UnionPay Credit Platinum, VISA Debit, VISA Credit Silver, and VISA Credit Gold attracting a number of customers. Furthermore, JDB has offered EDC devices capable of facilitating payments of goods with local and international cards and supporting WechatPay and AliPay, and partnered businesses and stores nationwide on YesPay Lao QR to support all bank payments.

Joint Development Bank commits to provide excellent, swift, modern, and internationally integrated banking services, value customers' needs, consistently develop its financial products by leveraging new technologies and outstanding customer supports, generate the optimal benefits to all parties concerned, and play a key role in contributing to the development of the nation's prosperous economy as per Joint Development Bank's motto of "Blooming Together."

JDB

ທະນາຄານຮ່ວມພັດທະນາ

“ ເຕີບໃຫຍ່ໄປພ້ອມກັນ ”

“ BLOOMING TOGETHER ”

JDB
ທະນາຄານຮ່ວມພັດທະນາ

" ທະນາຄານ ຮ່ວມພັດທະນາ
ມອບເງິນ 500 ລ້ານກີບ ເພື່ອປະກອບສ່ວນ
ຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ "



" ພິທີມອບ – ຮັບ
ການອຸປະຖຳ ປະກອບສ່ວນເຂົ້າໃນການຈັດ
ງານມະຫະກຳ ການເປີດ ປີທ່ອງທ່ຽວລາວ
ປະຈຳປີ 2024 ແຂວງໄຊຍະບູລີ "

" ທະນາຄານຮ່ວມພັດທະນາ JDB
ປະກອບສ່ວນ
ພິທີເປີດປີ ທ່ອງທ່ຽວລາວ 2024
ແຂວງ ສະຫວັນນະເຂດ "

ວຽກງານເຄື່ອນໄຫວ ປະຈຳປີ 2023

" ທະນາຄານຮ່ວມພັດທະນາ JDB
ເປັນຜູ້ສະໜັບສະໜຸນຫລັກໃນງານ
ມະຫະກຳບຸນຊ້າງ ປະຈຳປີ 2024
ແລະ ງານປະກວດ
ນາງສາວມະຫະກຳບຸນຊ້າງໄຊຍະບູລີ "

" ທະນາຄານຮ່ວມພັດທະນາ JDB
ສະໜັບສະໜຸນ
ການແຂ່ງຂັນເພາະກາຍ ຊິງແຊ້ມອາຊຽນ "

" ການສະໜັບສະໜູນ ບຸນຊ່ວງເຮືອທ່າວັດຈັນ "

ວຽກງານເຄື່ອນໄຫວ ປະຈຳປີ 2023

" ທະນາຄານຮ່ວມພັດທະນາ JDB
ພິທີມອບລົດ ໃຫ້ແກ່ຜູ້ໂຊກດີ
ທີ່ ສຳນັກງານໃຫ່ຍ ທະນາຄານ ຮ່ວມພັດທະນາ "

ວຽກງານເຄື່ອນໄຫວ ປະຈຳປີ 2023

" ກອງປະຊຸມ ສະຫຼຸບການດຳເນີນທຸລະກິດ ປີ 2023 "

JDB

ທະນາຄານຮ່ວມພັດທະນາ

ໜ່ວຍບໍລິການ ທະນາຄານຮ່ວມພັດທະນາ

“ເຕີບໃຫຍ່ໄປພ້ອມກັນ”

“BLOOMING TOGETHER”

LINE QR code

Website www.jdbbank.com.la

jdbbankofficial

Hotline 1499

ບົດລາຍງານຂອງຜູ້ກວດສອບບັນຊີອິດສະຫຼະ

ເຖິງ: ເຈົ້າຂອງທະນາຄານ ຮ່ວມພັດທະນາ ຈຳກັດ

ຄວາມເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນ ຂອງ ທະນາຄານ ຮ່ວມພັດທະນາ ຈຳກັດ ("ທະນາຄານ") ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023 ໄດ້ສະແດງສະຖານະທາງການເງິນຂອງທະນາຄານ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບການ ແລະ ແຈ້ງການທີ່ກ່ຽວຂ້ອງ ຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີ ຊຶ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

ເອກະສານລາຍງານການເງິນທີ່ກວດສອບ

ເອກະສານລາຍງານການເງິນຂອງທະນາຄານປະກອບດ້ວຍ:

- ໃບລາຍງານຜົນການດຳເນີນງານ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2023
- ໃບລາຍງານສ່ວນປ່ຽນແປງທຶນ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດມື້ດຽວກັນ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມຫຼັກການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs) ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບພາຍນອກ ສຳລັບການກວດສອບ ເອກະສານລາຍງານການເງິນ ຂອງບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫລັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເຫມາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

ຄວາມເປັນອິດສະຫລະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກ ທະນາຄານ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ. ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ ແລະ ຂໍ້ຫ້າມໃນການແຈກຢາຍ ແລະ ການນຳໃຊ້ບົດລາຍງານການເງິນ.

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ. ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມເອກະສານລາຍງານການເງິນ. ເອກະສານລາຍງານການເງິນນີ້ໄດ້ຖືກກະກຽມຕາມນະໂຍບາຍການບັນຊີຂອງທະນາຄານທີ່ໄດ້ອະທິບາຍໄວ້ໃນບົດຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ. ເຊິ່ງເອກະສານລາຍງານການເງິນອາດບໍ່ເໝາະສົມກັບວັດຖຸປະສົງອື່ນ.

ບົດລາຍງານຂອງພວກເຮົາມີໄວ້ສຳລັບທະນາຄານ ແລະ ທະນາຄານແຫ່ງ ສປປ ລາວ. ບໍ່ຄວນແຈກຢາຍໃຫ້ບຸກຄົນອື່ນ ຫຼື ນຳໃຊ້ໂດຍບຸກຄົນອື່ນທີ່ບໍ່ແມ່ນທະນາຄານ ແລະ ທະນາຄານແຫ່ງ ສປປ ລາວ. ຄວາມເຫັນຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິ້ງນີ້.

ຄວາມຮັບຜິດຊອບຂອງຄະນະຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ

ຄະນະຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ລະບຽບການ ການບັນຊີທີ່ກ່ຽວຂ້ອງ ແລະ ແຈ້ງການ ຂອງ ທະນາຄານແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ. ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດ ຂອງທະນາຄານໃນການດຳເນີນງານຢ່າງຕໍ່ເນື່ອງ. ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບ ກິດຈະການ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ. ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ. ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ. ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ. ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ. ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ. ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະ�โยบายການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ບໍລິຫານ.
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໃສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງທະນາຄານ ຫຼື ບໍ່. ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານລາຍງານການເງິນເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ ເຫດການ ຫຼື ສະພາບຕົວຈິງໃນອານາຄົດອາດເປັນສາເຫດໃຫ້ທະນາຄານບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຜູ້ບໍລິຫານ ກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກຜ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ບໍລິສັດ ພຣາຍສ້ວໍເຕີເຮົ້າສ້ກຸບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍ: ອະພິສິດ ທ່ຽງຕົງພົນໂຍ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 23 ພຶດສະພາ 2024

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

		ບົດ ອະທິບາຍ	2023 ກີບ	2022 ກີບ
A.	**ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ**			
1	ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ	3	1,334,107,258,549	942,752,964,851
2	ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ	3	(1,024,785,846,376)	(656,205,141,486)
I.	**ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ**		**309,321,412,173**	**286,547,823,365**
3	ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ	4	484,078,425,685	204,449,374,336
4	ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ	4	(67,755,220,241)	(36,695,384,932)
5	(ຂາດທຶນ)/ກຳໄລສຸດທິ ຈາກການລົງທຶນໃນຫຼັກຊັບ	5	17,231,179,060	16,296,498,384
6	ກຳໄລສຸດທິ ຈາກການຊື້-ຂາຍເງິນຕາຕ່າງປະເທດ	8	200,856,857,250	134,784,608,373
II.	**ລາຍຮັບສຸດທິຈາກການດຳເນີນງານ**		**943,732,653,927**	**605,382,919,526**
B	**ລາຍຮັບ ແລະ ລາຍຈ່າຍອື່ນໆ**			
7	ລາຍຮັບອື່ນໆຈາກການດຳເນີນງານ	6	11,524,419,393	10,371,889,344
8	ລາຍຈ່າຍບໍລິຫານ		(252,738,119,161)	(155,613,334,452)
8.1	ເງິນເດືອນ ແລະ ຄ່າໃຊ້ຈ່າຍກ່ຽວກັບພະນັກງານ	7	(148,936,609,736)	(81,313,820,393)
8.2	ລາຍຈ່າຍບໍລິຫານອື່ນໆ	9	(103,801,509,425)	(74,299,514,059)
9	ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	18; 19	(38,974,810,764)	(25,865,510,621)
10	ລາຍຈ່າຍອື່ນໆໃນການດຳເນີນງານ	10	(59,240,256,133)	(37,386,273,502)
11	ເງິນແຮສຸດທິສຳລັບໜີ້ທີ່ບໍ່ເກີດດອກອອກຜົນທີ່ລົງເປັນລາຍຈ່າຍ		(10,342,289,448)	(55,450,301,272)
III.	**ລວມກຳໄລກ່ອນເສຍອາກອນ**		**593,961,597,814**	**341,439,389,023**
12	ອາກອນກຳໄລພາຍໃນປີ	26	(83,658,926,464)	(60,010,136,269)
IV.	**ກຳໄລຫລັງເສຍອາກອນ**		**510,302,671,350**	**281,429,252,754**

ກະກຽມໂດຍ:

ທ່ານ ນາງ ຄອນສະຫວັນ ວິຊາເທບ
ຫົວໜ້າພະແນກບັນຊີ - ການເງິນ

ທ່ານ ສາຄອນ ພົມເຮ
ຜູ້ອຳນວຍການໃຫຍ່

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຖານະການເງິນ
ໃນວັນທີ 31 ທັນວາ 2023

		ບົດ ອະທິບາຍ	2023 ກີບ	2022 ກີບ
	ຊັບສິນ			
I	ເງິນສົດ ແລະ ເງິນຝາກຢູ່ກັບ ທຫລ		**5,148,769,142,980**	**3,147,021,869,172**
	1. ເງິນສົດໃນຄັງ	11	1,707,663,966,883	1,106,076,479,743
	2. ເງິນຝາກຢູ່ກັບ ທຫລ	12	3,441,105,176,097	2,040,945,389,429
II	ໜີ້ຕ້ອງຮັບຈາກທະນາຄານອື່ນ	13	**1,106,809,783,510**	**688,765,638,262**
	1. ເງິນຝາກກະແສລາຍວັນ		741,506,345,523	429,199,784,152
	2. ເງິນຝາກມີກຳນົດ		193,800,000,000	101,537,000,000
	3. ເງິນຝາກປະຢັດ		171,503,437,987	158,028,854,110
III	ການລົງທຶນໃນຫລັກຊັບ	14	**716,785,591,658**	**518,080,056,658**
	1. ຫຼັກຊັບປະເພດມີໄວ້ເພື່ອຂາຍ		2,350,000,000	2,350,000,000
	2. ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ		714,435,591,658	515,730,056,658
IV	ເງິນໃຫ້ກູ້ແກ່ລູກຄ້າ, ຫລັງຫັກເງິນແຮສະເພາະສຳລັບ ກົດຈະກຳສິນເຊື່ອ	15	**16,637,985,570,787**	**11,977,807,909,462**
V	ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດ ປະສົມ	16	**1,697,780,000**	**1,697,780,000**
VI	ຊັບສິນບັດຄົງທີ່		**345,165,133,576**	**306,731,718,801**
	1. ການກໍ່ສ້າງກຳລັງດຳເນີນ ແລະ ຊັບສິນບັດຄົງທີ່ພວມເຄື່ອນຍ້າຍ	17	7,886,831,879	11,743,465,031
	2. ຊັບສິນບັດຄົງທີ່ບໍ່ມີຕົວຕົນ	18	185,781,600,728	170,380,621,749
	3. ຊັບສິນບັດຄົງທີ່ມີຕົວຕົນ	19	151,496,700,969	124,607,632,021
VII	ຊັບສິນອື່ນໆ		**2,126,034,768,979**	**1,009,759,518,267**
	1. ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ		219,603,991,355	217,707,249,956
	2. ຊັບສິນອື່ນໆ	20	1,906,430,777,624	792,052,268,311
	ລວມຊັບສິນ		**26,083,247,771,490**	**17,649,864,490,622**

ໃບລາຍງານຖານະການເງິນ
ໃນວັນທີ 31 ທັນວາ 2023

	ບົດ ອະທິບາຍ	2023 ກີບ	2022 ກີບ
ໜີ້ສິນ ແລະ ທຶນ			
I ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນ	21	**2,060,772,476,184**	**1,958,725,721,976**
1. ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ		168,694,398,572	20,492,571,486
2. ເງິນຝາກມີກຳນົດ		543,718,700,000	620,041,760,000
3. ເງິນກູ້ຢືມຈາກທະນາຄານອື່ນ		1,348,310,000,000	1,317,435,000,000
4. ໜີ້ຕ້ອງສົ່ງອື່ນໆ		49,377,612	756,390,490
II ໜີ້ຕ້ອງສົ່ງໃຫ້ລູກຄ້າ	22	**21,867,163,162,279**	**14,140,149,338,476**
1. ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ		5,094,290,620,618	3,177,008,105,459
2. ເງິນຝາກມີກຳນົດ		16,772,872,541,661	10,963,141,233,017
III ໜີ້ສິນອື່ນໆ		**935,037,177,116**	**667,699,389,694**
1. ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ		700,874,155,002	496,645,269,321
2. ໜີ້ສິນອື່ນໆ		234,163,022,114	171,054,120,373
ລວມໜີ້ສິນ		**24,862,972,815,579**	**16,766,574,450,146**
IV ທຶນ ແລະ ຄັງສຳຮອງ			
1. ທຶນຈົດທະບຽນ	23	474,666,100,000	444,666,100,000
2. ຄັງສຳຮອງຕາມລະບຽບການ	24	47,225,488,634	31,030,555,696
3. ຄັງສຳຮອງທົ່ວໄປ	24	68,379,244,842	19,794,446,027
4. ເງິນແຮທົ່ວໄປສຳລັບກິດຈະກຳດ້ານສິນເຊື່ອ	15.3	81,649,291,641	58,237,986,413
5. ເງິນແຮຊັບສິນທີ່ບໍ່ສາມາດເກັບຄືນໄດ້		94,029,775,080	94,029,775,080
6. ກຳໄລສະສົມ		454,325,055,714	235,531,177,260
ລວມທຶນ		**1,220,274,955,911**	**883,290,040,476**
ລວມໜີ້ສິນ ແລະ ທຶນ		**26,083,247,771,490**	**17,649,864,490,622**

ກະກຽມໂດຍ:

ທ່ານ ນາງ ຄອນສະຫວັນ ວິຊາເທບ
ຫົວໜ້າພະແນກບັນຊີ - ການເງິນ

ອະນຸມັດໂດຍ:

ທ່ານ ສາຍອນ ບໍ່ພັນເຊ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ. ສປປ ລາວ
ວັນທີ: 23 ພຶດສະພາ 2024

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີສິ້ນສຸດວັນທີ 31 ທັນວາ 2023

	ບົດອະທິບາຍ	ທຶນຈົດທະບຽນ ກີບ	ສ່ວນປ່ຽນແປງຈາກການຕີລາຄາຊັບສິນຄົນໃໝ່ ກີບ	ເງິນແຮງທຶນໄປສຳລັບກິດຈະກຳດ້ານສິນເຊື່ອ ກີບ	ກຳໄລສະສົມ ຄັງສຳຮອງຕາມລະບຽບການ ກີບ	ກຳໄລສະສົມ ຄັງສຳຮອງທົ່ວໄປ ກີບ	ກຳໄລສະສົມ ກຳໄລສະສົມ ກີບ	ລວມ ກີບ
ຍອດເຫລືອໃນວັນທີ 1 ມັງກອນ 2022		424,666,100,000	94,029,775,080	37,906,011,116	17,351,998,475	9,030,673,961	90,887,496,712	673,872,055,344
ທຶນຈົດທະບຽນ ເພີ່ມເຕີມ	23	20,000,000,000	-	-	-	-	-	20,000,000,000
ແບ່ງເຂົ້າຄັງສຳຮອງຕາມລະບຽບການພາຍໃນປີ	24	-	-	-	13,678,557,221	-	(13,678,557,221)	-
ແບ່ງເຂົ້າຄັງສຳຮອງທົ່ວໄປພາຍໃນປີ	24	-	-	-	-	13,678,557,221	(13,678,557,221)	-
ຈ່າຍເງິນປັນຜົນພາຍໃນປີ	25	-	-	-	-	-	(109,428,457,764)	- 109,428,457,764
ເງິນແຮງທຶນໄປສຸດທີ ສຳລັບກິດຈະກຳດ້ານສິນເຊື່ອພາຍໃນປີ	15.3	-	-	20,331,975,297	-	-	-	20,331,975,297
ຄັງສຳຮອງສຳລັບການປັບໂຮມອາຍຸ	24	-	-	-	-	(2,914,785,155)	-	- 2,914,785,155
ກຳໄລສຸດທິພາຍໃນປີ		-	-	-	-	-	281,429,252,754	281,429,252,754
ຍອດເຫລືອໃນວັນທີ 31 ທັນວາ 2022		444,666,100,000	94,029,775,080	58,237,986,413	31,030,555,696	19,794,446,027	235,531,177,260	883,290,040,476

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

	ປີ ອະທິບາຍ	ທຶນຈົດທະບຽນ ກີບ	ສ່ວນຍົກລະດັບ ການຕີລາຄາຊັບສິນ ຄືນໃໝ່ ກີບ	ເງິນແຮທອດ ສຳລັບກິດຈະກຳ ດ້ານສິນເຊື່ອ ກີບ	ກຳໄລສະສົມ ຄັງສຳຮອງຕາມ ລະບຽບການ ກີບ	ກຳໄລສະສົມ ຄັງສຳຮອງທົ່ວໄປ ກີບ	ກຳໄລສະສົມ ກີບ	ລວມ ກີບ
ຍອດເຫລືອໃນວັນທີ 1 ມັງກອນ 2023		444,666,100,000	94,029,775,080	58,237,986,413	31,030,555,696	19,794,446,027	235,531,177,260	883,290,040,476
ທຶນຈົດທະບຽນ ເພີ່ມເຕີມ		30,000,000,000	-	-	-	-	-	30,000,000,000
ແບ່ງເຂົ້າຄັງສຳຮອງຕາມລະບຽບການພາຍໃນປີ	25	-	-	-	16,194,932,938	-	(16,194,932,938)	-
ແບ່ງເຂົ້າຄັງສຳຮອງທົ່ວໄປພາຍໃນປີ	25	-	-	-	-	16,194,932,938	(16,194,932,938)	-
ຈ່າຍເງິນປັນຜົນພາຍໃນປີ	26	-	-	-	-	-	(259,118,927,020)	(259,118,927,020)
ເງິນແຮທົ່ວໄປສຸດທິ ສຳລັບກິດຈະກຳດ້ານສິນເຊື່ອພາຍໃນປີ	15.3	-	-	23,411,305,228	-	-	-	23,411,305,228
ຄັງສຳຮອງສຳລັບການປັບໄໝອາກອນ		-	-		-	32,389,865,877	-	32,389,865,877
ກຳໄລສຸດທິພາຍໃນປີ		-	-	-	-	-	510,302,671,350	510,302,671,350
ຍອດເຫລືອໃນວັນທີ 31 ທັນວາ 2023		474,666,100,000	94,029,775,080	81,649,291,641	47,225,488,634	68,379,244,842	454,325,055,714	1,220,274,955,911

ກະກຽມໂດຍ:

ທ່ານ ນາງ ຄອນສະຫວັນ ວິຊາເທບ
ຫົວໜ້າພະແນກບັນຊີ - ການເງິນ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 23 ພຶດສະພາ 2024

ອະນຸມັດໂດຍ:

ທະນາຄານ ຮ່ວມພັດທະນາ ຈຳກັດ JOINT DEVELOPMENT BANK

ທ່ານ ສົມເພັດ ບົວພັນເຮີ
ຜູ້ອຳນວຍການໃຫຍ່

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

	ບົດ ອະທິບາຍ	2023 ກີບ	2022 ກີບ
ກິດຈະກຳການດຳເນີນງານ			
ກຳໄລ/(ຂາດທຶນ) ສຸດທິກ່ອນຫັກອາກອນ		**593,961,597,814**	**341,439,389,023**
ດັດແກ້ສຳລັບ:			
ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	18; 19	45,772,010,832	25,865,510,621
ລາຍຈ່າຍເງິນແຮສຳລັບການສູນເສຍເງິນກູ້	15.3	9,845,178,429	5,977,802,868
ລາຍຮັບດອກເບ້ຍ	3	(1,334,107,258,549)	(942,752,964,851)
ລາຍຈ່າຍດອກເບ້ຍ	3	1,024,785,846,376	656,205,141,486
ກະແສເງິນສົດຈາກກຳໄລໃນການດຳເນີນງານກ່ອນການ ປ່ຽນແປງຊັບສິນ ແລະ ໜີ້ສິນໃນການດຳເນີນງານ		**340,257,374,902**	**86,734,879,147**
ເພີ່ມຂຶ້ນ/(ຫຼຸດລົງ)ໃນຊັບສິນດຳເນີນງານ			
ໜີ້ຕ້ອງຮັບຈາກທະນາຄານອື່ນ		(865,564,138,704)	(163,714,471,994)
ເງິນກູ້ຍືມໃຫ້ລູກຄ້າ		(4,670,022,839,754)	(4,397,414,756,136)
ຊັບສິນອື່ນໆ		(1,114,378,509,313)	(338,415,573,843)
ເພີ່ມຂຶ້ນ/(ຫຼຸດລົງ)ໃນໜີ້ສິນດຳເນີນງານ			
ໜີ້ຕ້ອງສົ່ງໃຫ້ ທຫລ ແລະ ທະນາຄານອື່ນ		29,256,754,208	792,466,964,666
ໜີ້ຕ້ອງສົ່ງໃຫ້ລູກຄ້າ		7,727,013,823,803	5,412,568,789,558
ໜີ້ສິນອື່ນໆ		159,094,841,488	45,782,868,255
ກະແສເງິນສົດສຸດທິຈາກ (ໃຊ້ໃນ) ກິດຈະກຳການດຳເນີນງານ		**1,605,657,306,630**	**1,438,008,699,653**
ຈ່າຍດອກເບ້ຍ		(820,556,960,695)	(450,685,743,630)
ຮັບດອກເບ້ຍ		1,332,210,517,150	832,904,541,910
ຈ່າຍອາກອນກຳໄລ		(76,965,587,808)	(60,010,136,269)
ກະແສເງິນສົດສຸດທິ ທີ່ເກີດຈາກ/(ນຳໃຊ້ໃນ) ກິດຈະກຳການດຳເນີນງານ		**2,040,345,275,277**	**1,760,217,361,664**
ກິດຈະກຳການລົງທຶນ			
ຈ່າຍເງິນໃນການກໍ່ສ້າງກຳລັງດຳເນີນ ແລະ ຊື້ສິນບັດຄົງທີ່ມີຕົວຕົນ	17; 19	(7,790,239,379)	(52,114,050,357)
ຊື້ຊັບສິນບັດຄົງທີ່ບໍ່ມີຕົວຕົນ	18	(21,771,898,456)	(20,074,572,942)
ຊື້ຊັບສິນບັດຄົງທີ່ມີຕົວຕົນ		(55,069,693,376)	-
ຮັບເງິນຈາກການຂາຍຊັບສິນ	19	426,405,604	758,248,654
ຈ່າຍເງິນໃນການລົງທຶນໃນຫຼັກຊັບທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		(233,165,140,000)	(150,711,913,114)
ຮັບເງິນຈາກການລົງທຶນໃນຫຼັກຊັບທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		34,459,605,000	15,000,000,000.00
ຈ່າຍເງິນໃນການລົງທຶນວິສາຫະກິດຂາອຸ້ນ ແລະ ວິສາຫະກິດປະສົມ		-	(510,000,000)
ກະແສເງິນສົດສຸດທິ ທີ່ເກີດຈາກ/(ນຳໃຊ້ໃນ) ກິດຈະກຳການລົງທຶນ		**(282,910,960,607)**	**(207,652,287,759)**

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

	ບົດ ອະທິບາຍ	2023 ກີບ	2022 ກີບ
ກິດຈະກຳຈັດຫາເງິນ			
ຈ່າຍເງິນປັນຜົນ	26	(203,207,034,318)	(78,485,611,988)
ກະແສເງິນສົດສຸດທິນຳໃຊ້ເຂົ້າໃນກິດຈະກຳຈັດຫາເງິນ		**(203,207,034,318)**	**(78,485,611,988)**
ການປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ		**1,554,227,280,352**	**1,474,079,461,917**
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ		3,372,699,737,116	1,898,620,275,199
ເງິນສົດ ແລະ ທຽບເທົ່າເງິນສົດທ້າຍໃນປີ	28	**4,926,927,017,468**	**3,372,699,737,116**
ກິດຈະກຳການລົງທຶນທີ່ບໍ່ແມ່ນເງິນສົດ			
ການຈ່າຍເງິນປັນຜົນໂດຍຫັກລົບກັບໜີ້ຄ້າງຮັບຈາກຜູ້ຖືຮຸ້ນ ແລະ ອາກອນລາຍ ໄດ້ຈາກເງິນປັນຜົນ	26	55,911,892,702	30,942,845,776

ກະກຽມໂດຍ:

ທ່ານ ນາງ ຄອນສະຫວັນ ວິຊາເທບ
ຫົວໜ້າພະແນກບັນຊີ - ການເງິນ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 23 ພຶດສະພາ 2024

ອະນຸມັດໂດຍ:

ທ່ານ ສາຄອນ ຍົມໄຊ
ຜູ້ອຳນວຍການໃຫຍ່

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານ ຮ່ວມພັດທະນາ ຈຳກັດ ("ທະນາຄານ") ແມ່ນທະນາຄານເອກະຊົນຈຳກັດ ທີ່ໄດ້ດຳເນີນງານ ແລະ ຈົດທະບຽນຢູ່ ໃນ ສປປ ລາວ.
ກິດຈະກຳຫຼັກຂອງທະນາຄານແມ່ນໃຫ້ບໍລິການທາງດ້ານ: ການລະດົມທຶນ ແລະ ການຮັບຝາກເງິນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຈາກບັນດາອົງການຈັດຕັ້ງ ແລະ ບຸກຄົນຕ່າງໆ; ການປ່ອຍກູ້ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວໃຫ້ແກ່ອົງການຈັດຕັ້ງ ແລະ ບຸກຄົນທົ່ວໄປ ອີງຕາມເນື້ອໃນ ແລະ ຄວາມອາດສາມາດຂອງແຫຼ່ງເງິນທຶນຂອງທະນາຄານ; ການເຮັດທຸລະກຳເງິນຕາ ຕ່າງປະເທດ; ບໍລິການດ້ານການເງິນລະຫວ່າງປະເທດ; ສ່ວນຫຼຸດໃບຢັ້ງຢືນການຄ້າ, ພັນທະບັດ ແລະ ເອກະສານທີ່ມີມູນຄ່າຕ່າງໆ. ໃຫ້ບໍລິການອື່ນໆດ້ານການທະນາຄານຕາມທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ວາງອອກ.

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ອາຄານ ເລກທີ 82. ຖະໜົນລ້ານຊ້າງ. ນະຄອນຫຼວງວຽງຈັນ. ສປປ ລາວ. ໃນວັນທີ 31 ທັນວາ 2023. ທະນາຄານມີສຳນັກງານໃຫຍ່ ໜຶ່ງ (1) ແຫ່ງ. ໜ່ວຍບໍລິການ ຫົກສິບສີ່ (62) ແຫ່ງ.

ຂໍ້ມູນການເງິນແມ່ນສະແດງເປັນເງິນກີບ.

ຂໍ້ມູນທາງການເງິນໄດ້ອະນຸມັດໂດຍ (ຄະນະຜູ້ອຳນວຍການ) ໃນວັນທີ 22 ພຶດສະພາ 2024.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ເອກະສານລາຍງານການເງິນໄດ້ມີການກະກຽມຕາມຫຼັກການນະໂຍບາຍບັນຊີຂອງທະນະຄານທີ່ໄດ້ລະບຸໄວ້ດັ່ງລຸ່ມນີ້.

2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ຂອງທະນາຄານຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີຂອງທະນາຄານ ດັ່ງທີ່ ອະທິບາຍໃນບົດຊ້ອນທ້າຍ ຂອງເອກະສານລາຍງານການເງິນ ແລະ ກົດລະບຽບ ແລະ ແຈ້ງການຂອງທະນາຄານແຫ່ງ ສປປ ລາວ. ການນຳໃຊ້ຫຼັກການພື້ນຖານການບັນຊີ ອາດຈະແຕກຕ່າງຈາກຫຼັກການບັນຊີ ທີ່ຮັບຮອງເອົາໂດຍທົ່ວໄປໃນ ບັນດາປະເທດອື່ນໆ ແລະ ທີ່ບໍ່ຢູ່ໃນອຳນາດຄຸ້ມຄອງ ຂອງ ສປປ ລາວ. ເອກະສານລາຍງານການເງິນສະບັບນີ້ ບໍ່ໄດ້ ເຈດຕະນາ ສະແດງຖານະການເງິນ ແລະ ຜົນການດຳເນີນງານ ທີ່ບໍ່ຢູ່ໃນອຳນາດຄຸ້ມຄອງ ຂອງ ສປປ ລາວ.

ດ້ວຍເຫດນີ້ເອກະສານລາຍງານການເງິນດັ່ງກ່າວນີ້ ຈະໃຫ້ຂໍ້ມູນສະເພາະຜູ້ທີ່ໄດ້ຮັບແຈ້ງກ່ຽວກັບນະໂຍບາຍການບັນຊີຂອງ ທະນາຄານ, ລະບຽບການ ແລະ ແຈ້ງການອື່ນໆ ທີ່ກ່ຽວຂ້ອງ ເຊິ່ງອອກໂດຍທະນາຄານແຫ່ງ ສປປ ລາວ.

ການກະກຽມເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບວິທີການບັນຊີຂອງທະນາຄານທີ່ຮັບຮອງເອົານັ້ນ ຮຽກຮ້ອງໃຫ້ ຝ່າຍຜູ້ບໍລິຫານ ຕ້ອງມີການຄາດຄະເນ ແລະ ວາງຂໍ້ສົມມຸດຖານຫຼາຍປະການ ເພື່ອ ສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ຈຳ ນວນລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກທີ່ຄາດຄະເນປະຕິບັດດັ່ງກ່າວ ຕ້ອງກຳນົດຂຶ້ນບົນ ພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຝ່າຍຜູ້ບໍລິຫານ ກ່ຽວກັບ ເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ. ຊຶ່ງຜົນຂອງ ການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.2 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ

ການຮັບຮູ້ລາຍຮັບດອກເບ້ຍ

ລາຍຮັບຈາກດອກເບ້ຍແມ່ນຖືກຮັບຮູ້ຕາມຫຼັກການບັນຊີຄ້າງຮັບບົນພື້ນຖານການນຳໃຊ້ອັດຕາດອກເບ້ຍທີ່ໄດ້ລະບຸໄວ້ໃນສັນຍາເງິນກູ້ກັບລູກຄ້າ ຍົກເວັ້ນບັນຊີທີ່ບໍ່ເກີດດອກອອກຜົນ ແລະ ພິຈາລະນາສະເພາະ.

ໃນກໍລະນີທີ່ບັນຊີເງິນກູ້ກາຍມາເປັນບັນຊີທີ່ບໍ່ເກີດດອກອອກຜົນ ຫຼື ໃນເວລາທີ່ຜູ້ບໍລິຫານເຊື່ອວ່າຜູ້ກູ້ຢືມບໍ່ມີຄວາມສາມາດໃນການຈ່າຍຄືນເງິນຕົ້ນ ແລະ ດອກເບ້ຍ ແມ່ນຈະຍຸດການບັນທຶກລາຍຮັບດອກເບ້ຍ ແລະ ສຳລັບລາຍການທີ່ບັນທຶກຮຽບຮ້ອຍແລ້ວຈະຖືກກັບລາຍການຄືນ. ລາຍຮັບດອກເບ້ຍຈະຖືກຮັບຮູ້ຖ້າຫາກມີການຮຽກເກັບດອກເບ້ຍຄ້າງຮັບຈາກເງິນໃຫ້ກູ້ຢືມທີ່ບໍ່ເກີດດອກອອກຜົນ ຫຼື ມີການໄດ້ຮັບເງິນຕົວຈິງ. ບັນຊີລູກຄ້າຈະຖືວ່າເປັນບັນຊີທີ່ບໍ່ເກີດດອກອອກຜົນເມື່ອການຊຳລະເງິນຄືນໃຫ້ກັບທະນະຄານໄດ້ຄ້າງຊຳລະເກີນສາມເດືອນ ຫຼື 90 ວັນ. ເຊິ່ງເປັນໄປຕາມກົດລະບຽບຂອງ ທຫລ.

ການຮັບຮູ້ລາຍຈ່າຍດອກເບ້ຍ

ລາຍຈ່າຍດອກເບ້ຍແມ່ນຈ່າຍໃຫ້ສຳລັບເງິນຝາກຈາກລູກຄ້າ, ທະນາຄານອື່ນ, ສະຖາບັນການເງິນ ແລະ ເງິນກູ້ຢືມ ແມ່ນຖືກຮັບຮູ້ຕາມຫຼັກການບັນຊີບົນພື້ນຖານຄ້າງຈ່າຍ.

2.3 ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ

ຄ່າທຳນຽມ ແລະ ຄ່າບໍລິການ ປະກອບມີ ຄ່າທຳນຽມທີ່ໄດ້ຮັບສຳລັບການໂອນເງິນ (ລວມເຖິງການຊຳລະແຊກ), ທຸລະກຳແລກປ່ຽນເງິນຕາຕ່າງປະເທດ.,ການຄ້ຳປະກັນທາງການເງິນ ແລະ ບໍລິການດ້ານການທະນາຄານອື່ນໆ.

ລາຍຮັບ ຄ່າທຳນຽມ ແລະ ຄ່າບໍລິການແມ່ນຮັບຮູ້ໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການຕາມພື້ນຖານເງິນສົດ.

2.4 ການຮັບຮູ້ລາຍຮັບເງິນປັນຜົນ

ລາຍຮັບເງິນປັນຜົນຂອງການລົງທຶນໃນຮຸ້ນແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການໃນເວລາທີ່ທະນາຄານມີສິດໃນການຮັບເງິນປັນຜົນນັ້ນ.

2.5 ການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ ແລະ ການປ່ຽນຄ່າເງິນຕາຕ່າງປະເທດ

ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕາຕ່າງປະເທດ ແມ່ນຈະໄດ້ມີການປ່ຽນຄ່າເງິນຕາດັ່ງກ່າວເປັນສະກຸນເງິນກີບໃນທ້າຍປີໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ປິດບັນຊີທ້າຍງວດ. ລາຍຮັບ ແລະ ລາຍຈ່າຍ ທີ່ເປັນສະກຸນເງິນຕາຕ່າງປະເທດທີ່ເກີດຂຶ້ນໃນໄລຍະຈະຖືກປ່ຽນຄ່າເປັນເງິນສະກຸນເງິນກີບໂດຍໃຊ້ອັດຕາແລກປ່ຽນສະເລ່ຍຂອງເດືອນ. ກຳໄລ ແລະ ຂາດທຶນ ຈາກອັດຕາແລກປ່ຽນ ຂອງ ຊັບສິນ ແລະ ໜີ້ສິນ ທາງການເງິນ ແມ່ນໄດ້ຮັບຮູ້ໃນໃບລາຍງານຜົນການດຳເນີນງານເມື່ອລາຍການນັ້ນເກີດຂຶ້ນ.

2.6 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີ ເງິນສົດ ແລະ ການລົງທຶນໄລຍະສັ້ນ ທີ່ມີສະພາບຄ່ອງສູງ ໂດຍມີອາຍຸຄົບກຳນົດຕ່ຳກວ່າ ຫຼື ທຽບເທົ່າ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນ ທີ່ມີອາຍຸຄົບກຳນົດຕ່ຳກວ່າ ຫຼື ທຽບເທົ່າ 30 ວັນ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.7 ເງິນກູ້ໃຫ້ລູກຄ້າ

ເງິນກູ້ໃຫ້ລູກຄ້າ ແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດເຫຼືອທ້າຍ ລົບໃຫ້ ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ.

2.8 ການຈັດປະເພດຂອງການສຳຮອງສຳລັບກິດຈະກຳສິນເຊື່ອ

ເງິນແຮສຳລັບໜີ້ເສຍ

ການຈັດປະເພດ

ອີງຕາມ ລະບຽບການ ຂອງທະນາຄານແຫ່ງ ສ.ປ.ປ ລາວ ສະບັບເລກທີ 512/ທຫລ ລົງວັນທີ 29 ມີຖຸນາ 2018, ໜັງສືທາງການສະບັບເລກທີ 898/ CBSD ລົງວັນທີ 14 ພະຈິກ 2018 ຮຽກຮ້ອງໃຫ້ມີການຈັດຊັ້ນໜີ້ ແລະ ເງິນແຮສຳລັບໜີ້ເສຍ. ດັ່ງນັ້ນ, ເງິນກູ້ແມ່ນຖືກຈັດຊັ້ນເປັນເງິນກູ້ທີ່ເກີດດອກອອກຜົນ ຫຼື ເງິນກູ້ທີ່ບໍ່ມີການເຄື່ອນໄຫວໂດຍອີງຕາມການຄ້າງຊຳລະ ແລະ ປັດໃຈທາງດ້ານຄຸນນະພາບອື່ນໆ.

ເງິນກູ້ຖືກຈັດຊັ້ນເປັນເງິນກູ້ປົກກະຕິ (ກຸ່ມ A) ຫຼື ເງິນກູ້ທີ່ຄວນເອົາໃຈໃສ່ ຫຼື ຕິດຕາມພິເສດ (ກຸ່ມ B) ແມ່ນຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ. ເງິນກູ້ທີ່ຖືກຈັດຊັ້ນເປັນຕ່ຳກ່ວາມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໃສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນຖືກພິຈາລະນາເປັນເງິນກູ້ທີ່ບໍ່ມີການເຄື່ອນໄຫວ.

ທະນາຄານໄດ້ຈັດຕັ້ງປະຕິບັດກົດລະບຽບ 238/ທຫລ, ລົງວັນທີ 26 ມີນາ 2020 ແລະ ຄຳແນະນຳ 249/ທຫລ ລົງວັນທີ 11 ພຶດສະພາ 2020 ກ່ຽວກັບການປັບໂຄງສ້າງ, ການຂະຫຍາຍເວລາ ແລະ ການຮັກສາກຸ່ມການຈັດຊັ້ນເງິນກູ້ທີ່ຊ່ວຍເຫຼືອຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດໂຄວິດ-19. ດັ່ງນັ້ນ. ທະນາຄານຈຶ່ງໄດ້ປັບໂຄງສ້າງສິນເຊື່ອທີ່ສອດຄ່ອງກັບເງື່ອນໄຂ ແລະ ຈັດຊັ້ນໜີ້ກ່ອນ ວັນທີ 1 ມັງກອນ 2020.

ເງິນແຮ

ອີງຕາມກົດລະບຽບສະບັບໃໝ່ເລກທີ 512/ທຫລ ລົງວັນທີ 29 ມີຖຸນາ 2018 ກ່ຽວກັບວິທີການຄິດໄລ່ສຳຮອງເງິນແຮສຳລັບໜີ້ສິນໄດ້ລະບຸວ່າທະນາຄານສາມາດນຳມາພິຈາລະນາໃນມູນຄ່າຫຼັກຊັບຄ້ຳປະກັນໃນອັດຕາເປີເຊັນທີ່ລະບຸໄວ້ໃນກົດລະບຽບຈະຖືກຫັກອອກຈາກຍອດຄ້າງຊຳລະເງິນໃຫ້ກູ້ຢືມກ່ອນແລ້ວໃຫ້ອັດຕາສ່ວນຂອງເງິນແຮສຳລັບໜີ້ເສຍໃຫ້.

ອີງຕາມກົດລະບຽບສະບັບເລກທີ 784/ທຫລ ລົງວັນທີ 3 ກັນຍາ 2019 ທະນາຄານທຸລະກິດທີ່ໃຫ້ເງິນກູ້ຢືມແກ່ ທຸລະກິດ ຂະ ໜາດກາງ ແລະ ຂະໜາດນ້ອຍ (SMEs) ພາຍໃຕ້ຂໍ້ກົດນິດນີ້ມີສິດຕັ້ງສຳຮອງເງິນແຮໃນອັດຕາ 0.20% ຂອງຍອດຄ້າງຊຳລະເງິນໃຫ້ກູ້ຢືມແກ່ SMEs ເຊິ່ງຈັດຢູ່ໃນປະເພດປົກກະຕິ.

ສຳລັບເງິນກູ້ທີ່ຕິດພັນກັບໂຄງການພັດທະນາພື້ນຖານໂຄງລ່າງຂອງລັດຖະບານທີ່ຄ້າງຊຳລະ ແຕ່ໂຄງການຊຳລະ ແມ່ນພາຍໃນກຳນົດເວລາຂອງລັດຖະບານ, ທະນາຄານໄດ້ຮັບອະນຸຍາດໃຫ້ຈັດປະເພດເງິນກູ້ດັ່ງກ່າວເປັນເງິນກູ້ພິເສດຕາມຈົດໝາຍເຫດທາງລັດຖະການ ສະບັບເລກທີ 172/ທຫລ ລົງວັນທີ 15 ພຶດສະພາ 2017 ອອກໂດຍທະນາຄານແຫ່ງ ສປປ ລາວ

ເງິນແຮແມ່ນໄດ້ຖືກຈັດປະເພດເປັນ ທົ່ວໄປ ແລະ ສະເພາະ ໂດຍອີງໃສ່ການຈັດປະເພດເງິນໃຫ້ກູ້ຢືມ. ຂ້າງລຸ່ມນີ້ແມ່ນສະຫຼຸບສັງລວມຂອງອັດຕາ ເງິນແຮສຳຮອງ ທີ່ນຳໃຊ້ສຳລັບການຈັດປະເພດເງິນໃຫ້ກູ້ຢືມແຕ່ລະປະເພດ ໃນວັນທີຂອງໃບລາຍງານຖານະການເງິນ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.8 ການຈັດປະເພດຂອງການສຳຮອງສຳລັບກິດຈະກຳສິນເຊື່ອ (ຕໍ່)

ປະເພດ ຂອງໜີ້	ປະເພດ	ການບັນຊີສຳລັບຍອດເຫຼືອ ເງິນແຮ	ການຫັກ ເງິນແຮ	ການບັນຊີສຳລັບ ສ່ວນ ປ່ຽນແປງໃນຍອດເຫຼືອ ເງິນແຮ
ເງິນກູ້ທີ່ເກີດດອກອອກຜົນ (ທົ່ວໄປ)				
A	ໜີ້ປົກກະຕິ	ບັນທຶກໃນທຶນ ແລະ ຄັງສຳຮອງ	0.5%	ລາຍຈ່າຍ/ລາຍຮັບອື່ນ
B	ໜີ້ຄວນເອົາໃຈໃສ່	ເພື່ອຫັກກັບຍອດເງິນໃຫ້ກູ້ຢືມ	3% - 5%	ລາຍຈ່າຍ/ລາຍຮັບອື່ນ
ເງິນກູ້ທີ່ບໍ່ເກີດດອກອອກຜົນ (ສະເພາະ)				
C	ໜີ້ຕ່ຳກ່ວາມາດຕະຖານ	ຫັກກັບຍອດເງິນໃຫ້ກູ້ຢືມ	20%	ເງິນແຮສຸດທິສຳລັບ ໜີ້ NPL
D	ໜີ້ສົງໃສ	ຫັກກັບຍອດເງິນໃຫ້ກູ້ຢືມ	50%	ເງິນແຮສຸດທິສຳລັບ ໜີ້ NPL
E	ໜີ້ສູນ	ຫັກກັບຍອດເງິນໃຫ້ກູ້ຢືມ	100%	ເງິນແຮສຸດທິສຳລັບ ໜີ້ NPL

(i) ຈຳນວນ ເງິນແຮ ແມ່ນຖືກຄິດໄລ່ໂດຍສຸດຕໍ່ໄປນີ້:

a. ໜີ້ປົກກະຕິ = ອັດຕາເງິນແຮ x ຍອດຄ້າງຊຳລະຂອງເງິນໃຫ້ກູ້ຢືມ
b. ໜີ້ຄວນເອົາໃຈໃສ່ = ອັດຕາເງິນແຮ x ຍອດຄ້າງຊຳລະຂອງເງິນໃຫ້ກູ້ຢືມ

(ii) ຍອດເງິນແຮສຳລັບເງິນໃຫ້ກູ້ຢືມເກີດດອກອອກຜົນກຸ່ມ A ຈະຖືກບັນທຶກໃນໃບລາຍງານຖານະການເງິນພາຍໃຕ້ "ເງິນແຮສຳລັບເງິນໃຫ້ກູ້ຢືມທີ່ເກີດດອກອອກຜົນ" ພາຍໃຕ້ທຶນ ແລະ ຄັງສ□ຳຮອງ. ເງິນແຮສະສົມຂອງເງິນແຮສຳລັບເງິນໃຫ້ກູ້ຢືມທີ່ບໍ່ເກີດດອກອອກຜົນ ແລະ ເງິນແຮ ສຳລັບ ເງິນໃຫ້ກູ້ຢືມເກີດດອກອອກຜົນກຸ່ມ B ໄດ້ຖືກບັນທຶກ ໃນ ໃບລາຍງານຖານະການເງິນພາຍໃຕ້ "ເງິນໃຫ້ກູ້ຢືມແກ່ລູກຄ້າ, ຫັກ ເງິນແຮສຳລັບເງິນໃຫ້ກູ້ຢືມທີ່ບໍ່ເກີດດອກ ອອກຜົນ".

(iii) ການປ່ຽນແປງໃນເງິນແຮສຳລັບເງິນໃຫ້ກູ້ຢືມທີ່ເກີດດອກອອກຜົນ ແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ເປັນ "ລາຍຈ່າຍໃນການດຳເນີນງານອື່ນໆ" ສຳລັບ ລາຍຈ່າຍເງິນແຮ, ແລະ "ລາຍຮັບໃນການດຳເນີນງານອື່ນໆ" ສຳລັບການກັບລາຍການຂອງລາຍຈ່າຍເງິນແຮ. ການປ່ຽນແປງໃນເງິນແຮສຳລັບເງິນໃຫ້ກູ້ຢືມບໍ່ເກີດດອກອອກຜົນ ແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ພາຍໃຕ້ "ເງິນແຮສຸດທິສຳລັບເງິນໃຫ້ກູ້ຢືມທີ່ບໍ່ເກີດດອກອອກຜົນ ປ່ຽນເປັນ /(ກັບລາຍການອອກ) ລາຍຈ່າຍ".

2.9 ສັນຍາເຊົ່າ

ນະໂຍບາຍການບັນຊີ ຂອງທະນາຄານ ອີງຕາມແຈ້ງການ ສະບັບເລກທີ 1433/ທຫລ ລົງວັນທີ 24 ຕຸລາ 2019 ຊຶ່ງຮຽກຮ້ອງໃຫ້ບັນດາທະນາຄານທຸລະກິດນຳໃຊ້ IFRS 16 ໃນການກະກຽມ ແລະ ການລາຍງານເອກະສານລາຍງານການ ເງິນ.

ທະນາຄານຮັບຮູ້ສິດການໃຊ້ຊັບສິນ ແລະ ໜີ້ສິນສັນຍາເຊົ່າສຳລັບສັນຍາເຊົ່າທີ່ເຄີຍຈັດປະເພດມາກ່ອນເປັນສັນຍາເຊົ່າທາງ ການເງິນ ຫຼື ສັນຍາເຊົ່າໃນການດຳເນີນງານ, ຍົກເວັ້ນສັນຍາເຊົ່າໄລຍະສັ້ນ ແລະ ສັນຍາເຊົ່າຊັບສິນທີ່ມີມູນຄ່າຕ່ຳ. ສິດການໃຊ້ ຊັບສິນສຳລັບສັນຍາເຊົ່າສ່ວນໃຫຍ່ຮັບຮູ້ໂດຍມູນຄ່າຕາມບັນຊີ ຖ້າວ່າມາດຕະຖານດັ່ງກ່າວໄດ້ຖືກນຳໃຊ້ສະເໝີໄປ, ນອກ ໝົດຈາກການນຳໃຊ້ອັດຕາການກູ້ຢືມທີ່ເພີ່ມຂຶ້ນໃນທຳອິດຂອງການຍື່ນຄຳຮ້ອງຂໍ. ໃນສັນຍາເຊົ່າບາງລາຍການ, ສິດການໃຊ້ ຊັບສິນຖືກຮັບຮູ້ຈຳນວນທີ່ເທົ່າກັບໜີ້ສິນຕາມສັນນຍາເຊົ່າ, ປັບປຸງສຳລັບຄ່າເຊົ່າຈ່າຍລ່ວງໜ້າ ແລະ ຄ່າເຊົ່າຄ້າງຈ່າຍທີ່ຮັບຮູ້ ກ່ອນໜ້ານີ້. ໜີ້ສິນຕາມສັນຍາເຊົ່າຮັບຮູ້ຕາມມູນຄ່າປະຈຸບັນຂອງຈຳນວນເງິນທີ່ຊຳລະຕາມສັນຍາເຊົ່າທີ່ເຫຼືອຄິດຫຼຸດໂດຍໃຊ້ ອັດຕາການກູ້ຢືມໃນມື້ທຳອິດຂອງການຍື່ນຄຳຮ້ອງຂໍ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.9 ສັນຍາເຊົ່າ (ຕໍ່)

ສັນຍາເຊົ່າສຳລັບການເຊົ່າສຳນັກງານ ທີ່ຈະຮັບຮອງເອົາ IFRS16 ມາໃຊ້ ທະນາຄານໄດ້ຈັດປະເພດສັນຍາເຊົ່າແຕ່ລະລາຍ ໃນວັນທີເລີ່ມຕົ້ນເປັນສັນຍາເຊົ່າການດຳເນີນງານ. ບັນທຶກຄ່າເຊົ່າເປັນລາຍຈ່າຍຕາມໄລຍະເວລາຂອງສັນຍາ.

ສິດການນຳໃຊ້ຊັບສິນ

ເມື່ອເລີ່ມຕົ້ນຂອງສັນຍາ, ທະນາຄານຈະປະເມີນວ່າສັນຍາແມ່ນ, ຫຼືປະກອບດ້ວຍ, ການຈັດການ ສັນຍາເຊົ່າໂດຍອີງໃສ່ວ່າ ສັນຍາທີ່ສົ່ງກັບຜູ້ໃຊ້ (ຜູ້ເຊົ່າ) ສິດທິໃນການຄວບຄຸມການນຳໃຊ້ຊັບສິນທີ່ກຳນົດໃນໄລຍະເວລາໃດໜຶ່ງ, ແລກປ່ຽນເພື່ອ ພິຈາລະນາ. ຖ້າສັນຍາມີຫຼາຍກວ່າອົງປະກອບຂອງສັນຍາເຊົ່າ, ຫຼື ການປະສົມປະສານຂອງສັນຍາເຊົ່າ ແລະ ການບໍລິການ, ສິ່ງຕອບແທນຈະຖືກປັນສ່ວນໃຫ້ແຕ່ລະອົງປະກອບຂອງສັນຍາເຊົ່າ ແລະ ບໍ່ແມ່ນການໃຫ້ເຊົ່າໂດຍສະຫຼຸບ ແລະ ໃນແຕ່ ລະການວັດມູນຄ່າໃຫມ່ແຕ່ລະຄັ້ງຕາມລາຄາຂາຍ ແບບແຍກສ່ວນທີ່ກ່ຽວຂ້ອງກັບ. ທະນາຄານລວມອົງປະກອບການເຊົ່າ ແລະ ບໍ່ແມ່ນການໃຫ້ເຊົ່າໃນກໍລະນີທີ່ບໍ່ສາມາດແຍກອົງປະກອບທີ່ບໍ່ແມ່ນການໃຫ້ເຊົ່າ.

ທະນາຄານຮັບຮູ້ ສິດການໃຊ້ຊັບສິນໃນມື້ເລີ່ມຕົ້ນສັນຍາເຊົ່າ (ເຊັ່ນວັນທີຊັບສິນພ້ອມໃຊ້ງານ), ສິນການໃຊ້ຊັບສິນແມ່ນ ສະແດງມູນຄ່າຕົ້ນທຶນເດີມຫັກໃຫ້ຄ່າຫຼ້ຍຫ້ຽນສະສົມ ແລະ ຂາດທຶນຈາກການດ້ອຍຄ່າ, ແລະ ປັບປຸງສຳລັບການປະເມີນ ມູນຄ່າຄືນໃຫ່ຂອງໜີ້ສິນສັນຍາເຊົ່າ. ຕົ້ນທຶນຂອງສິນການໃຊ້ຊັບສິນປະກອບມີ ຈຳນວນຂອງໜີ້ສິນຕາມສັນຍາເຊົ່າທີ່ປັບປຸງ ສຳລັບການຊຳລະຄ່າເຊົ່າທີ່ເກີດຂຶ້ນໃນ ຫຼື ກ່ອນວັນເລີ່ມຕົ້ນ, ບວກໃຫ້ຕົ້ນທຶນທາງກົງມືທຳອິດທີ່ເກີດຂຶ້ນ ແລະ ລາຍຈ່າຍ ໂດຍປະມານໃນການຮື້ຖອນ ແລະ ເອົາຊັບສິນທີ່ຕິດພັນອອກ ຫຼື ຟື້ນຟູຊັບສິນທີ່ຕິດພັນ ຫຼື ສະຖານທີ່ທີ່ຊັບສິນຕັ້ງຢູ່, ຫັກ ໃຫ້ແຮງຈູງໃຈໃນການເຊົ່າທີ່ໄດ້ຮັບ. ໄລຍະເວລາຂອງສັນຍາເຊົ່າ ລວມເຖິງໄລຍະເວລາທີ່ຄວບຄຸມໂດຍທາງເລືອກໃນການ ຂະຫຍາຍ ຖ້າຫາກກຸ່ມບໍລິສັດ ມີຄວາມໝັ້ນໃຈພໍສົມຄວນທີ່ຈະໃຊ້ຕົວເລືອກນັ້ນ. ຍົກເວັ້ນແຕ່ທະນາຄານ ມີຄວາມໝັ້ນໃຈ ພໍສົມຄວນຈະໄດ້ຮັບສິດຄວາມເປັນເຈົ້າຂອງຂອງຊັບສິນຕາມສັນຍາເຊົ່າໃນມື້ສິ້ນສຸດໄລຍະເວລາສັນຍາເຊົ່າ. ຮັບຮູ້ສິດການ ໃຊ້ຊັບສິນແມ່ນຫັກຄ່າຫຼ້ຍຫ້ຽນແບບສະໝ່ຳສະເໝີ ກັບໄລຍະເວລາທີ່ສັ້ນຂຶ້ນທີ່ປະເມີນອາຍຸການໃຊ້ງານ ແລະ ຕາມໄລຍະ ເວລາຂອງສັນຍາເຊົ່າ. ສິດການໃຊ້ຊັບສິນຕ້ອງໄດ້ຮັບການປະເມີນການດ້ອຍຄ່າ.

ໜີ້ສິນຕາມສັນຍາເຊົ່າ

ໃນມື້ເລີ່ມຕົ້ນຂອງສັນຍາເຊົ່າ, ທະນາຄານຮັບຮູ້ໜີ້ສິນຕາມສັນຍາເຊົ່າເຊິ່ງວັດໂດຍມູນຄ່າໃນປະຈຸບັນຂອງການຊຳລະຕາມ ສັນຍາເຊົ່າຈະປະຕິບັດຕະຫຼອດອາຍຸຕາມສັນຍາເຊົ່າ. ການຊຳລະຕາມສັນຍາເຊົ່າປະກອບມີຊຳແບບຄົງທີ່ (ລວມເຖິງການຊຳ ລະແບບຄົງທີ່ໃນສາລະສຳຄັນ) ຫັກດ້ວຍແຮງຈູງໃຈຕາມສັນຍາເຊົ່າທີ່ໄດ້ຮັບ, ການຊຳລະຕາມສັນຍາເຊົ່າພັນແປເຊິ່ງຂຶ້ນຢູ່ ກັບດັດສະນີ ຫຼື ອັດຕາ. ແລະ ຈຳນວນທີ່ຄາດວ່າຈະພາຍໃຕ້ການຄ້ຳປະກັນມູນຄ່າຄົງເຫຼືອ. ການຊຳລະຕາມສັນຍາເຊົ່າລວມ ເຖິງລາຄາການໃຊ້ສິດຂອງຕົວເລືອກການຊື້ທີ່ສົມເຫດສົມຜົນທີ່ທະນາຄານຈະໃຊ້ ແລະ ການຊຳລະຄ່າປັບໃໝສຳລັບການ ຍົກເລີກສັນຍາເຊົ່າ ຖ້າຫາກໄລຍະເວລາຕາມສັນຍາເຊົ່າສະແດງໃຫ້ເຫັນວ່າທະນາຄານໃຊ້ສິດໃນການຍົກເລີກ. ການຊຳລະ ຄ່າເຊົ່າແບບຜັນແປທີ່ບໍ່ຂຶ້ນກັບດັດສະນີ ຫຼື ອັດຕາຈະຮັບຮູ້ເປັນລາຍຈ່າຍໃນໄລຍະເວລາທີເຫດການ ຫຼື ເງື່ອນໄຂທີ່ກໍ່ໃຫ້ເກີດ ການຊຳລະເກີດຂຶ້ນ.

ໃນການຄິດໄລ່ມູນຄ່າປະຈຸບັນຂອງການຊຳລະຕາມສັນຍາເຊົ່າ, ທະນາຄານໃຊ້ອັດຕາການກູ້ຢືມທີ່ເພີ່ມຂຶ້ນ ໃນວັນທີເລີ່ມຕົ້ນ ຂອງສັນຍາ ຖ້າຫາກບໍ່ສາມາດກຳນົດອັດຕາດອກເບ້ຍ ໃນສັນຍາເຊົ່າໄດ້ທັນທີ ຫຼືຈາກວັນທີເລີ່ມຕົ້ນຂອງຈຳນວນໜີ້ສິນຕາມ ສັນຍາເຊົ່າຈະເພີ່ມຂຶ້ນ ເພື່ອໃຫ້ສອດຄ່ອງກັບການເພີ່ມຂຶ້ນຂອງດອກເບ້ຍ ແລະ ລົດລົງສຳລັບຄ່າເຊົ່າທີ່ຈ່າຍໄປ ນອກຈາກນີ້ ມູນຄ່າຕາມບັນຊີຂອງໜີ້ສິນຕາມສັນຍາເຊົ່າຈະຖືກວັດມູນຄ່າຄືນໃໝ່ ຖ້າຫາກມີການແກ້ໄຂປ່ຽນແປງໄລຍະເວລາຂອງ ສັນຍາເຊົ່າ ການປ່ຽນແປງຈຳນວນຕາມສັນຍາເຊົ່າຄົງທີ່ໃນສາລະສຳຄັນ ຫຼື ການປ່ຽນແປງການປະເມີນເພື່ອຊື້ຊັບສິນທີ່ຕິດ ພັນ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.10 ເງິນລົງທຶນໃນຫຼັກຊັບ

ເງິນລົງທຶນເພື່ອຂາຍ

ການລົງທຶນເພື່ອຂາຍລວມມີ ທຶນຮອນທີ່ທະນາຄານຕັ້ງໃຈຖືໄວ້ເພື່ອການລົງທຶນ ແລະ ພ້ອມທີ່ຈະຊື້ຂາຍ. ຫຼັກຊັບເຫຼົ່ານີ້ບໍ່ໄດ້ຖືກຊື້ຂາຍເລື້ອຍໆແຕ່ສາມາດຂາຍໄດ້ທຸກເວລາທີ່ຜົນປະໂຫຍດຂອງທຸລະກຳ.

ການລົງທຶນເພື່ອຂາຍ ແມ່ນໄດ້ຮັບຮູ້ດ້ວຍມູນຄ່າຕົ້ນທຶນໃນເບື້ອງຕົ້ນ ແລະ ໃນເວລາຕໍ່ມາຈະຖືກປະເມີນດ້ວຍມູນຄ່າຕົ້ນທຶນຫັກດ້ວຍຄ່າເສື່ອມລາຄາ (ຖ້າມີ).

ແຕ່ລະໄລຍະ, ການລົງທຶນເພື່ອຂາຍແມ່ນຂຶ້ນກັບການທົບທວນການດຸ່ນດ່ຽງ. ການຈັດຫາການດຸ່ນດ່ຽງຂອງຫຼັກຊັບເຫຼົ່ານີ້ແມ່ນເຮັດເມື່ອມີການຫຼຸດລົງຢ່າງຫຼວງຫຼາຍ ຫຼືເປັນເວລາດົນນານຂອງມູນຄ່າຍຸດຕິທຳຕ່ຳກວ່າຕົ້ນທຶນຂອງພວກເຂົາ. ການສະໜອງການດຸ່ນດ່ຽງຖືກຮັບຮູ້ເປັນ "ກຳໄລ/(ການສູນເສຍ) ສຸດທິຈາກການລົງທຶນຫຼັກຊັບ" ໃນໃບລາຍງານຜົນການດຳເນີນງານ.

ຫຼັກຊັບທີ່ຖືຈົນຄົບກຳນົດ

ເງິນລົງທຶນໃນຫຼັກຊັບທີ່ຖືຈົນຄົບກຳນົດ ແມ່ນຫຼັກຊັບໜີ້ ທີ່ມີການກຳນົດການຊຳລະ ຫຼື ຄົບກຳນົດ ຊຶ່ງທະນາຄານ ມີຄວາມຕັ້ງໃຈ ແລະ ມີຄວາມສາມາດທີ່ຈະຖືຈົນຄົບກຳນົດ ເພື່ອຮັບດອກເບ້ຍ. ເມື່ອຂາຍກ່ອນວັນທີກຳນົດ ຫຼັກຊັບເຫຼົ່ານີ້ຈະຖືກຈັດປະເພດຄືນໃໝ່ເປັນຫຼັກຊັບເພື່ອການຄ້າ ຫຼື ຫຼັກຊັບເພື່ອຂາຍ.

ຫຼັກຊັບທີ່ຖືຈົນຄົບກຳນົດແມ່ນຮັບຮູ້ເບື້ອງຕົ້ນໃນລາຄາຕົ້ນທຶນ ແລະ ສະແດງໃນລາຄາຕົ້ນທຶນ ສ່ວນເກີນ ແລະ ສ່ວນຫຼຸດທີ່ເກີດຈາກການຊື້ຫຼັກຊັບຫັກຄ່າເສື່ອມໃນໃບລາຍງານຜົນການດຳເນີນງານໂດຍໃຊ້ວິທີສະໝ່ຳສະເໝີ ຕະຫຼອດປີຕັ້ງແຕ່ວັນທີຊື້ຈົນເຖິງວັນທີຄົບກຳນົດ.

ຫຼັກຊັບທີ່ຖືຈົນຄົບກຳນົດແມ່ນຕ້ອງທົບທວນຄ່າເສື່ອມມູນຄ່າຄືນເປັນໄລຍະ. ການສຳຮອງຄ່າເສື່ອມມູນຄ່າຂອງຫຼັກຊັບເຫຼົ່ານີ້ແມ່ນສ້າງຂຶ້ນເມື່ອມູນຄ່າຍຸດຕິທຳຂອງຫຼັກຊັບຕ່ຳກວ່າລົດລົງຢ່າງສາລະສຳຄັນ ຫຼື ເປັນເວລາດົນ ການສຳຮອງຄ່າເສື່ອມມູນຄ່າຮັບຮູ້ເປັນ "ກຳໄລສຸດທິ/(ຂາດທຶນ) ຈາກການລົງທຶນໃນຫຼັກຊັບ" ໃນໃບລາຍງານຜົນການດຳເນີນງານ.

2.11 ການລົງທຶນໃນວິສາຫະກິດປະສົມ

ການລົງທຶນຂອງທະນາຄານແມ່ນຖືກຮັບຮູ້ເປັນຕົ້ນທຶນ ແລະ ສະແດງຢູ່ໃນໃບລາຍງານຖານະການເງິນ. ເງິນປັນຜົນ ແລະ ລາຍຮັບຈາກການລົງທຶນໃນ ວິສາຫະກິດປະສົມຖືກສະແດງຢູ່ໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການຄື: "ກຳໄລສຸດທິຈາກການລົງທຶນໃນຫຼັກຊັບທຶນ".

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.12 ຊັບສິນບັດຄົງທີ່

2.12.1 ຊັບສິນຄົງທີ່ບໍ່ມີຕົວຕົນ

ຊັບສິນຄົງທີ່ບໍ່ມີຕົວຕົນ ປະກອບມີ ສິດນຳໃຊ້ທີ່ດິນ ແລະ ໂປຣແກຣມ. ການຊື້ລິຂະສິດໃນການນຳໃຊ້ໂປຣແກຣມ ຄອມພິວເຕີແມ່ນວັດໃນມູນຄ່າຕົ້ນທຶນ. ມູນຄ່າຕົ້ນທຶນເຫຼົ່ານີ້ ແມ່ນຫັກຄ່າເສື່ອມຕະຫຼອດອາຍຸການໃຊ້ງານດັ່ງຕໍ່ໄປນີ້:

ສິດນຳໃຊ້ທີ່ດິນ (*)	ບໍ່ມີຄ່າເສື່ອມມູນຄ່າ
ໂປຣແກຣມ.	20%

(*): ຕົ້ນທຶນຂອງສິດການໃຊ້ທີ່ດິນ ຈະບໍ່ຖືກແບ່ງຈ່າຍ ເນື່ອງຈາກມີອາຍຸການໃຊ້ງານບໍ່ແນ່ນອນ.

ຕົ້ນທຶນທີ່ກ່ຽວຂ້ອງກັບການບຳລຸງຮັກສາ ໂປຣແກຣມຄອມພິວເຕີ ແມ່ນຮັບຮູ້ເປັນລາຍຈ່າຍເມື່ອເກີດຂຶ້ນ.

2.12.2 ຊັບສິນຄົງທີ່ມີຕົວຕົນ

ຊັບສິນຄົງທີ່ມີຕົວຕົນປະກອບມີອາຄານ ແລະ ການປັບປຸງ. ອຸປະກອນຫ້ອງການ. ເຟີນິເຈີ ແລະ ສິ່ງຕິດຕັ້ງ. ແລະ ຍານພາຫະນະ.

ຊັບສິນຄົງທີ່ມີຕົວຕົນແມ່ນສະແດງລາຄາຕົ້ນທຶນຫັກຄ່າຫຼຸ້ຍຫ້ຽນສະສົມ, ຖ້າມີ.

ຕົ້ນທຶນຂອງຊັບສິນປະກອບມີລາຄາຊື້ບວກລາຍຈ່າຍທາງກົງກັບການນຳສິນມາເຂົ້າສູ່ສະພາບພ້ອມໃຊ້ງານຕາມຈຸດປະ ສົງການໃຊ້ງານ.

ລາຍຈ່າຍເພີ່ມເຕີມສຳລັບການປັບປຸງ ແລະ ການຕໍ່ອາຍຸການໃຊ້ງານ ແມ່ນໄດ້ຈົດເຂົ້າເປັນຕົ້ນທຶນ ແລະ ເປັນລາຍຈ່າຍສຳລັບການບຳລຸງຮັກສາ ແລະ ສ້ອມແປງ ເຂົ້າໃນໃບລາຍງານຜົນການດຳເນີນງານ, ຖ້າມີ

ເມື່ອຊັບສິນຂາຍ ຫຼື ສະສາງ. ຕົ້ນທຶນ ແລະ ຄ່າຫຼຸ້ຍຫຽນສະສົມ ຫຼື ຄ່າເສື່ອມມູນຄ່າ ແມ່ນໄດ້ລົບອອກຈາກໃບລາຍງານຖານະການເງິນ ແລະ ກຳໄລ ຫຼື ຂາດທຶນ ທີ່ເກີດຈາກການສະສາງຈະຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ.

2.13 ຄ່າຫຼຸ້ຍຫ້ຽນ

ຄ່າຫຼຸ້ຍຫ້ຽນ ແລະ ການແບ່ງຈ່າຍຂອງຊັບສິນຄົງທີ່ແມ່ນຄິດໄລ່ແບບສະໝ່ຳສະເໝີ ຕາມອັດຕາທີ່ກຳນົດຕະຫຼອດອາຍຸການໃຊ້ງານໂດຍປະມານຕາມກົດໝາຍອາກອນສະບັບປັບປຸງເລກທີ 67 ລົງວັນທີ 18 ມີຖຸນາ 2019 ທີ່ມີຜົນບັງຄັບໃຊ້ສຳລັບຮອບໄລຍະການບັນຊີເລີ່ມຕົ້ງແຕ່ວັນທີ 1 ມັງກອນ 2020. ອັດຕາທີ່ໃຊ້ມີດັ່ງຕໍ່ໄປນີ້:

ອາຄານ & ການປັບປຸງ	5%-20%
ເຄື່ອງໃຊ້ຫ້ອງການ	20%
ຍານພາຫະນະ	20%
ອື່ນໆ	10%-20%

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.14 ຄັງສຳຮອງຕາມລະບຽບການ

ພາຍໃຕ້ກົດໝາຍວ່າດ້ວຍທະນາຄານທຸລະກິດ ລົງວັນທີ 7 ທັນວາ 2018 ກຳນົດໃຫ້ທະນາຄານທຸລະດກິດແບ່ງປັນກຳໄລສຸດທິໃຫ້ກອງທຶນ ສຳຮອງຕາມກົດໝາຍ, ເພື່ອຂະຫຍາຍທຸລະກິດ ແລະ ອື່ນໆ.

ອີງຕາມກົດໝາຍວິສາຫະກິດ, ທະນາຄານ ຈະຕ້ອງນຳເງິນ 10% ຂອງກຳໄລ ຫຼັງຈາກຫັກອາກອນໃນປີ ເຂົ້າກອງທຶນສຳຮອງຕາມກົດໝາຍ. ເມື່ອເງິນກອງທຶນສຳຮອງຄົບ 50% ຂອງທຶນຈົດທະບຽນ, ທະນາຄານແມ່ນຕ້ອງຢຸດການສຳຮອງດັ່ງກ່າວ ຍົກເວັ້ນແຕ່ກົດໝາຍຈະກົດຈະກຳນົດໄວ້ເປັນຢ່າງອື່ນ. ທະນາຄານຈະບັນທຶກຫຼັງຈາກທີ່ໄດ້ຮັບການອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ.

ກອງທຶນຂະຫຍາຍທຸລະກິດ ແລະ ກອງທຶນອື່ນໆ ຈະຖືກສ້າງຂຶ້ນຕາມການຕັດສິນໃຈຂອງຄະນະຜູ້ອຳນວຍການ.

2.15 ອາກອນ

ທະນາຄານມີພັນທະຕ້ອງຈ່າຍອາກອນໃນອັດຕາ 20% ຂອງກຳໄລທັງໝົດກ່ອນຫັກອາກອນ ໂດຍອີງຕາມກົດໝາຍສ່ວຍອາກອນ.

ການມອບອາກອນຂອງທະນາຄານແມ່ນຕ້ອງຖືກກວດສອບຄືນໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆແມ່ນມີຫລາຍປະເພດເຊິ່ງອາດຈະແປຄວາມໄດ້ເປັນຫລາຍຢ່າງ. ຈຳນວນທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນສະເພາະກົດຈະການອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

2.16 ຜົນປະ�โຫຍດຂອງພະນັກງານ

ຜົນປະໂຫຍດພາຍຫຼັງອອກການ

ຜົນປະໂຫຍດພາຍຫຼັງອອກການແມ່ນຈ່າຍໃຫ້ພະນັກງານຂອງທະນາຄານ ໂດຍກົມກອງທຶນປະກັນສັງຄົມທີ່ຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ທະນາຄານໄດ້ຈຳເປັນຕ້ອງປະກອບສ່ວນເຂົ້າໃນຜົນປະໂຫຍດຫລັງການອອກແຮງງານ ໂດຍການຈ່າຍຄ່າປະກັນສັງຄົມໃຫ້ອົງການປະກັນສັງຄົມໃນອັດຕາ 6.00% ຂອງເງິນເດືອນພື້ນຖານຂອງພະນັກງານຕໍ່ເດືອນ. ທະນາຄານບໍ່ມີພັນທະເພີ່ມເຕີມກ່ຽວກັບຜົນປະໂຫຍດຫຼັງການຈ້າງງານສຳລັບພະນັກງານຂອງຕົນນອກຈາກນີ້.

ຜົນປະໂຫຍດຈາກການເລີກຈ້າງ

ອີງຕາມມາດຕາ 82 ຂອງກົດໝາຍວ່າດ້ວຍແຮງງານ (ສະບັບປັບປຸງ) ເລກທີ 43/ສພຊ ລົງວັນທີ 24 ທັນວາ 2013 ແລະ ປະກາດໃຊ້ໂດຍປະທານປະເທດແຫ່ງ ສປປ ລາວ ຕາມລັດຖະດຳລັດເລກທີ 068/ປປທ ລົງວັນທີ 24 ມັງກອນ 2014. ທະນາຄານມີພັນທະຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ້ທີ່ຖືກເລີກຈ້າງຍ້ອນກໍລະນີດັ່ງລຸ່ມນີ້:

- ເມື່ອພະນັກງານບໍ່ມີສຸຂະພາບແຂງແຮງ ດັ່ງນັ້ນ, ຈຶ່ງບໍ່ສາມາດເຮັດວຽກຕໍ່ໄດ້ຢ່າງເຕັມເມັດເຕັມໜ່ວຍ
- ເມື່ອນາຍຈ້າງຫາກໄດ້ພິຈາລະນາວ່າມີຄວາມຈຳເປັນຈະຕ້ອງໄດ້ຫລຸດຈຳນວນພະນັກງານລົງເພື່ອປັບປຸງໂຄງສ້າງວຽກງານພາຍໃນໜ່ວຍງານ.

ສຳລັບການຍົກເລີກສັນຍາຈ້າງງານ ໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນອຸດໜຸນເທື່ອດຽວໃຫ້ພະນັກງານ ພື້ນຖານການຄິດໄລ່ແມ່ນ 10% ຂອງເງິນເດືອນພື້ນຖານກ່ອນເລີກຈ້າງຄູນໃຫ້ຈຳນວນເດືອນເຮັດວຽກ ຄູນດ້ວຍຈຳນວນເດືອນທັງໝົດທີ່ເຮັດວຽກ.

2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.16 ເງິນປະໂຫຍດຂອງພະນັກງານ (ຕໍ່)

ໃນວັນທີ 31 ທັນວາ 2023, ບໍ່ມີພະນັກງານທະນາຄານຜູ້ທີ່ເລີກຈ້າງເກີດຂຶ້ນດັ່ງທີ່ກ່າວຂ້າງເທິງ, ດັ່ງນັ້ນ ທະນາຄານບໍ່ໄດ້ຫັກຄັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

3. ລາຍຮັບສຸດທິຈາກດອກເບັ້ຍ ແລະ ຄ່າຍຄິດອກເບັ້ຍ

	2023 ກີບ	2022 ກີບ
ລາຍຮັບຈາກດອກເບັ້ຍ ແລະ ຄ່າຍຄິດອກເບັ້ຍຈາກ:		
ເງິນຝາກລະຫວ່າງທະນາຄານ	9,453,704,644	3,809,249,792
ເງິນກູ້ທີ່ປ່ອຍໃຫ້ລູກຄ້າ	1,294,568,303,184	908,257,844,938
ພັນທະບັດລັດຖະບານ ທີ່ອອກໃຫ້ໂດຍກະຊວງການເງິນ	30,085,250,721	30,685,870,121
	1,334,107,258,549	**942,752,964,851**
ລາຍຈ່າຍດອກເບັ້ຍ ແລະ ຄ່າຍຄິດອກເບັ້ຍສຳລັບ:		
ເງິນຝາກຂອງທະນາຄານອື່ນ	(98,233,057,501)	(73,347,148,938)
ເງິນຝາກຂອງລູກຄ້າ	(926,552,788,875)	(582,857,992,548)
	(1,024,785,846,376)	**(656,205,141,486)**
ລາຍຮັບສຸດທິຈາກດອກເບັ້ຍອື່ນໆ ແລະ ຄ່າຍຄິດອກເບັ້ຍ	**309,321,412,173**	**286,547,823,365**

4. ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ

	2023 ກີບ	2022 ກີບ
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ທຸຈະກຳລະຫວ່າງທະນາຄານ	1,572,732,566	980,917,569
ທຸລະກຳທາງດ້ານການເງິນ, ທຸລະກຳ ATM ແລະ ການໂອນເງິນ	478,276,030,005	199,571,981,997
ບໍລິການຊຳລະສະສາງ	4,229,663,114	3,896,474,770
	484,078,425,685	**204,449,374,336**
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ບໍລິການຊຳລະສະສາງ	(10,832,926,054)	(7,548,171,619)
ທຸຈະກຳລະຫວ່າງທະນາຄານ	(56,922,294,187)	(29,147,213,313)
	(67,755,220,241)	**(36,695,384,932)**
ລາຍຮັບສຸດທິຄ່າທຳນຽມ ແລະ ຄ່າບໍລິການ	**416,323,205,444**	**167,753,989,404**

5. (ຂາດທຶນ) / ກຳໄລສຸດທິ ຈາກມູນຄ່າທຶນໃນຫຼັກຊັບ

	2023 ກີບ	2022 ກີບ
ກຳໄລຈາກສ່ວນຫຼຸດພັນທະບັດ	**17,231,179,060**	**16,296,498,384**
ສ່ວນຫຼຸດພັນທະບັດ	17,231,179,060	16,296,498,384
ສຳຮອງການດ້ອຍຄ່າຂອງຫຼັກຊັບເພື່ອຂາຍ	-	-
	17,231,179,060	**16,296,498,384**

6. ລາຍຮັບອື່ນໆຈາກການດຳເນີນງານ

	2023 ກີບ	2022 ກີບ
ການກັບລາຍການດອກເບ້ຍຄ້າງຈ່າຍ ແລະ ລາຍຈ່າຍ	1,024,123,097	2,461,132,170
ເກັບຈາກໜີ້ເສຍທີ່ໄດ້ສະສາງອອກ	527,075	651,588
ລາຍຮັບຈາກການຂາຍຊັບສິນບັດ	186,216,960	36,661,112
ລາຍຈ່າຍທີ່ໄດ້ຮັບຄືນ	4,976,278,442	3,612,795,418
ລາຍຮັບທີ່ບໍ່ແມ່ນຈາກການດຳເນີນງານ	2,243,486,240	1,819,410,542
ລາຍຮັບພິເສດ	3,093,787,579	2,441,238,514
	11,524,419,393	**10,371,889,344**

7. ເງິນເດືອນ ແລະ ຄ່າໃຊ້ຈ່າຍອື່ນໆກ່ຽວກັບພະນັກງານ

	2023 ກີບ	2022 ກີບ
ລາຍຈ່າຍເງິນເດືອນ ແລະ ຄ່າຈ້າງ	83,913,124,358	54,901,658,369
ລາຍຈ່າຍປະກັນສັງຄົມສຳລັບພະນັກງານ	2,131,919,284	2,140,907,162
ໂບນັດ ແລະ ຜົນປະໂຫຍດອື່ນໆ	42,155,482,829	15,071,485,000
ລາຍຈ່າຍຝຶກອົບຮົມ	470,599,170	47,826,797
ອື່ນໆ	20,265,484,095	9,151,943,065
	148,936,609,736	**81,313,820,393**

8. ກຳໄລສຸດທິຈາກການຊື້ - ຂາຍເງິນຕາຕ່າງປະເທດ

	2023 ກີບ	2022 ກີບ
ກຳໄລຈາກການແລກປ່ຽນເງິນຕາຕ່າງປະເທດ	8,128,573,105,640	7,436,128,795,440
ຂາດທຶນຈາກການແລກປ່ຽນເງິນຕາຕ່າງປະເທດ	(7,927,716,248,390)	(7,301,344,187,067)
	200,856,857,250	**134,784,608,373**

9. ລາຍຈ່າຍບໍລິຫານອື່ນໆ

	2023 ກີບ	2022 ກີບ
ຄ່ານາຍໜ້າ ແລະ ຜູ້ຊ່ຽວຊານ	14,411,855,803	2,149,255,663
ຄ່ານ້ຳມັນ	1,883,305,817	1,648,496,695
ລາຍຈ່າຍໃນການເດີນທາງ	3,007,278,589	8,488,239,953
ລາຍຈ່າຍຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ	6,309,827,830	5,512,251,816
ລາຍຈ່າຍທົ່ວໄປ ແລະ ລາຍຈ່າຍບໍລິຫານ	5,424,838,351	4,651,220,738
ລາຍຈ່າຍຄ່າປະກັນໄພ	932,997,391	735,022,237
ຄ່າໄປສະນີ ແລະ ໂທລະຄົມມະນາຄົມ	5,616,988,826	4,642,333,052
ລາຍຈ່າຍຄ່າສ້ອມແປງ ແລະ ບຳລຸງຮັກສາ	20,950,337,383	15,165,586,050
ລາຍຈ່ານຄ່າໄຟຟ້າ ແລະ ນ້ຳປະປາ	4,471,301,574	3,105,976,479
ລາຍຈ່າຍຄ່າເຊົ່າຫ້ອງການ	9,670,350,851	5,955,856,650
ລາຍຈ່າຍຄ່າບັນເທີງ	7,708,761,146	5,255,936,283
ລາຍຈ່າຍອື່ນໆ	23,413,665,864	16,989,338,443
	103,801,509,425	**74,299,514,059**

10. ລາຍຈ່າຍອື່ນໆໃນການດຳເນີນງານ

	2023 ກີບ	2022 ກີບ
ລາຍຈ່າຍກອງທຶນປົກປ້ອງຜູ້ຝາກເງິນ	18,096,537,612	11,541,191,316
ລາຍຈ່າຍເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ (ບົດອະທິບາຍ 16.3)	31,358,194,457	19,956,193,731
ອື່ນໆ	9,785,524,064	5,888,888,455
	59,240,256,133	**37,386,273,502**

11. ເງິນສົດໃນຄັງ

	2023 ກີບ	2022 ກີບ
ເງິນສົດໃນຄັງເປັນສະກຸນເງິນກີບ	234,753,334,500	102,044,375,100
ເງິນສົດໃນຄັງເປັນສະກຸນເງິນຕ່າງປະເທດ	1,472,910,632,383	1,004,032,104,643
	1,707,663,966,883	**1,106,076,479,743**

12. ເງິນຝາກຢູ່ກັບ ທຫລ

	2023 ກີບ	2022 ກີບ
ເງິນຝາກກະແສລາຍວັນ	2,306,253,267,075	1,679,394,619,111
ເງິນຝາກພາກບັງຄັບ (i)	1,064,845,994,022	321,544,855,318
ເງິນຝາກສຳລັບທຶນຈົດທະບຽນ (ii)	70,005,915,000	40,005,915,000
	3,441,105,176,097	**2,040,945,389,429**

ເງິນຝາກຢູ່ກັບທະນາຄານແຫ່ງ ສປປ ລາວ ລວມມີບັນຊີເງິນຝາກເພື່ອການຊຳລະສະສາງ ແລະ ເງິນຝາກແຮບັງຄັບ. ເງິນຝາກປະເພດນີ້ບໍ່ມີດອກເບ້ຍ.

(i) ອີງຕາມລະບຽບການຂອງ ທຫລ, ທະນາຄານຕ້ອງໄດ້ຮັກສາເງິນສົດສຳຮອງຢູ່ກັບ ທຫລ ໃນຮູບແບບຂອງເງິນຝາກພາກບັງຄັບ ເຊິ່ງຖືກຄິດໄລ່ສອງຄັ້ງຕໍ່ເດືອນໃນອັດຕາ 5% ສຳລັບເງິນກີບ ແລະ 5.00% - 10.00% ສຳລັບເງິນຕາຕ່າງປະເທດ (2022: 3.00% ແລະ 5.00%) ຂອງເງິນຝາກລູກຄ້າທີ່ມີມື້ຄົບກຳນົດໜ້ອຍກວ່າ 12 ເດືອນ, ພາຍໃນປີ ທະນາຄານໄດ້ຮັກສາເງິນຝາກແຮບັງຄັບ ໂດຍສອດຄ່ອງກັບຂໍ້ກຳນົດຂອງ ທະນາຄານແຫ່ງ ສປປ ລາວ.

(ii) ອີງຕາມລະບຽບການ 02/PR ຂອງ ທຫລ, ທະນາຄານການຄ້າຕ້ອງຮັກສາຍອດເງິນຝາກພິເສດຂັ້ນຕ່ຳທີ່ທາງ ທຫລ ວາງອອກ ເຊິ່ງເທົ່າກັບ 25% ຂອງທຶນທີ່ຊຳລະແລ້ວ ເພື່ອຮັບປະກັນການດຳເນີນທຸລະກິດຢ່າງຕໍ່ເນື່ອງ. ທະນາຄານໄດ້ຮັບການອະນຸມັດຈາກ ທຫລ ເພີ່ມທຶນໝຸນວຽນຂອງຕົນ. ມາຮອດວັນທີ 31 ທັນວາ 2023, ຍອດເງິນຝາກພິເສດຂອງທະນາຄານແມ່ນ 70,005,915,000 ກີບ,

13. ໜີ້ຕ້ອງຮັບຈາກທະນາຄານອື່ນ

	2023 ກີບ	2022 ກີບ
ເງິນຝາກກະແສລາຍວັນຢູ່ກັບທະນາຄານອື່ນໆ	**741,506,345,523**	**429,199,784,152**
- ທະນາຄານພາຍໃນປະເທດ	46,257,322,951	133,839,925,211
- ທະນາຄານຕ່າງປະເທດ	695,249,022,572	295,359,858,941
ເງິນຝາກມີກຳນົດຢູ່ທະນາຄານອື່ນ	**193,800,000,000**	**101,537,000,000**
- ທະນາຄານພາຍໃນປະເທດ (ii)	193,800,000,000	101,537,000,000
ເງິນຝາກປະຢັດຢູ່ທະນາຄານອື່ນ	**171,503,437,987**	**158,028,854,110**
- ທະນາຄານພາຍໃນປະເທດ	818,676,738	922,995,289
- ທະນາຄານຕ່າງປະເທດ	170,684,761,249	157,105,858,821
	1,106,809,783,510	**688,765,638,262**

ອັດຕາດອກເບ້ຍສຳລັບໜີ້ຕ້ອງສົ່ງທະນາຄານອື່ນພາຍໃນປີມີດັ່ງລຸ່ມນີ້:

(i) ເງິນຝາກປະຢັດບໍ່ມີໄລຍະເວລາ ແລະໄດ້ຮັບດອກເບ້ຍ 3.5% 5.43% ຕໍ່ປີ (2022: 0.4% ຕໍ່ປີ)

(ii) ເງິນຝາກໄລຍະຍາວເປັນສະກຸນໂດລາ, ມີໄລຍະເວລາ 3 ເດືອນ, ພ້ອມກັບດອກເບ້ຍ 2.5% - 5.5% ຕໍ່ປີ (2022: 3.00% - 5% ຕໍ່ປີ)

14. ການລົງທຶນໃນຫຼັກຊັບ

	2023 ກີບ	2022 ກີບ
ຫຼັກຊັບມີໄວ້ເພື່ອຂາຍ (i)	2,350,000,000	2,350,000,000
ຫຼັກຊັບທີ່ຖືຈົນຄົບກຳນົດ (ii)	714,435,591,658	515,730,056,658
	716,785,591,658	**518,080,056,658**

14.1 ຫຼັກຊັບປະເພດມີໄວ້ເພື່ອຂາຍ

ລາຍລະອຽດຫຼັກຊັບປະເພດມີໄວ້ເພື່ອຂາຍ ຄືດັ່ງນີ້:

	2023 ກີບ	2022 ກີບ
ຮຸ້ນຈົດທະບຽນໃນ ບໍລິສັດໄຟຟ້າລາວ ມະຫາຊົນ	4,300,000,000	4,300,000,000
ຄັງແຮສຳລັບຄ່າເສື່ອມມູນຄ່າ	(1,950,000,000)	(1,950,000,000)
	2,350,000,000	**2,350,000,000**

(i) ຫຼັກຊັບເພື່ອຂາຍແມ່ນຕົວແທນຮຸ້ນເປັນຕົວແທນໜຶ່ງລ້ານຮຸ້ນຂອງບໍລິສັດ ໄຟຟ້າລາວ ມະຫາຊົນ ຮຸ້ນເຫຼົ່ານີ້ມີມູນຄ່າໃບຫນ້າຂອງ 4,300 ຕໍ່ຫຸ້ນ.

14. ການລົງທຶນໃນຫຼັກຊັບ (ຕໍ່)

14.2 ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ

(ii) ສະແດງເຖິງພັນທະບັດທີ່ອອກໂດຍກະຊວງການເງິນ. ລາຍລະອຽດຂອງພັນທະບັດວັນຄົບກຳນົດອີງຕາມສັນຍາມີດັ່ງນີ້:

ລາຍລະອຽດຂອງບັນດາພັນທະບັດອື່ນໆຕາມວັນທີໝົດກຳນົດຂອງສັນຍາ ມີດັ່ງຕໍ່ໄປນີ້:

	2023 ກີບ	2022 ກີບ
ພາຍໃນ 1 ປີ	25,000,000,000	25,000,000,000
ໄລຍະເວລາ 1 ຫາ 5 ປີ	249,114,686,558	171,703,869,558
ໄລຍະເວລາເກີນ 5 ປີ	440,320,905,100	319,026,187,100
	714,435,591,658	**515,730,056,658**

ລາຍລະອຽດອັດຕາດອກເບ້ຍ ພັນທະບັດທີ່ຖືໄວ້ຈົນຄົບກຳນົດ ມີດັ່ງນີ້:

	2023 %	2022 %
ພາຍໃນ 1 ປີ	5.50%	5.50%
ໄລຍະເວລາ 1 ຫາ 5 ປີ	4.50% - 5.20%	5.00% - 5.20%
ໄລຍະເວລາເກີນ 5 ປີ	5.30% - 6.00%	5.30% - 6.00%

15. ເງິນໃຫ້ກູ້ແກ່ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອ

	2023 ກີບ	2022 ກີບ
ເງິນກູ້ໃຫ້ກັບລູກຄ້າ (ບົດອະທິບາຍເລກທີ 15.1; 15.2; 15.3; 15.4)	16,669,895,535,280	12,036,831,354,373
ຫັກເງິນແຮສະເພາະ	(31,909,964,493)	(59,023,444,911)
ໃນນີ້:		
ເງິນແຮສະເພາະສຳລັບເງິນກູ້ບໍ່ເກີດດອກອອກຜົນ	(4,310,980,277)	(2,481,057,447)
ເງິນແຮສະເພາະສຳລັບເງິນກູ້ໜີ້ຄວນເອົາໃຈໃສ່	(27,598,984,216)	(56,542,387,464)
	16,637,985,570,787	**11,977,807,909,462**

15. ເງິນໃຫ້ກູ້ແກ່ລູກຄ້າ, ຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອ (ຕໍ່)

ອັດຕາດອກເບັ້ຍສຳລັບເງິນກູ້ພາຍໃນປີ ມີດັ່ງລຸ່ມນີ້:

	2023 ອັດຕາດອກເບັ້ຍ % ຕໍ່ປີ	2022 ອັດຕາດອກເບັ້ຍ % ຕໍ່ປີ
ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນກີບ	5.50% - 16.00%	5.50% - 16.00%
ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນໂດລາ	7.00% - 18.00%	7.00% - 18.00%
ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນບາດ	7.00% - 13.00%	7.00% - 13.00%

15.1 ວິເຄາະເງິນກູ້ຕາມສະກຸນເງິນ

	2023 ກີບ	2022 ກີບ
ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນກີບ	2,112,981,690,386	1,496,678,648,516
ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນໂດລາ	5,903,053,493,681	6,628,736,956,851
ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນບາດ	8,653,860,351,213	3,911,415,749,006
	16,669,895,535,280	**12,036,831,354,373**

15.2 ວິເຄາະເງິນກູ້ຕາມຄຸນນະພາບເງິນກູ້

	2023 ກີບ	2022 ກີບ
ໜີ້ປົກກະຕິ	15,923,617,004,187	11,690,396,612,566
ໜີ້ຄວນເອົາໃຈໃສ່	77,152,655,595	87,701,914,919
ໜີ້ຕ່ຳກວ່າມາດຕະຖານ	191,379,566	111,824,189,617
ໜີ້ສົງໃສ	502,866,458,828	51,129,734,499
ໜີ້ສູນ	166,068,037,104	95,778,902,772
	16,669,895,535,280	**12,036,831,354,373**

15. ເງິນໃຫ້ກູ້ແກ່ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອ (ຕໍ່)

15.3 ສ່ວນປ່ຽນແປງຂອງເງິນແຮສຳລັບການສູນເສຍເງິນກູ້

ສ່ວນປ່ຽນແປງຂອງເງິນແຮສຳລັບການສູນເສຍເງິນກູ້ ໃນໄລຍະ ປີ 2023 ມີດັ່ງລຸ່ມນີ້:

	ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ	ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ		
	ເງິນແຮສະເພາະສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ ກີບ	ເງິນແຮສະເພາະສຳລັບເງິນກູ້ທີ່ຄວນເອົາໃຈໃສ່ ກີບ	ເງິນແຮທົ່ວໄປສຳລັບເງິນກູ້ປົກກະຕິ ກີບ	ລວມ ກີບ
ຍອດເຫຼືອ ໃນວັນທີ 01 ມັງກອນ 2023	56,542,387,464	2,481,057,447	58,237,986,413	117,261,431,324
ລາຍຈ່າຍເງິນແຮ/(ເກັບຄືນ) ພາຍໃນປີ	(28,918,793,378)	1,651,961,281	8,193,217,148	(19,073,614,949)
ສ່ວນຕ່າງຈາກອັດຕາແລກປ່ຽນ	(24,609,870)	177,961,548	15,218,088,080	15,371,439,758
ຍອດເຫຼືອ ໃນວັນທີ 31 ທັນວາ 2023	**27,598,984,216**	**4,310,980,276**	**81,649,291,641**	**113,559,256,133**

15. ເງິນໃຫ້ກູ້ແກ່ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອ (ຕໍ່)

15.3 ສ່ວນປ່ຽນແປງຂອງເງິນແຮສຳລັບການສູນເສຍເງິນກູ້ (ຕໍ່)

ສ່ວນປ່ຽນແປງຂອງເງິນແຮສຳລັບການສູນເສຍເງິນກູ້ ໃນໄລຍະ ປີ 2022 มีดังลุ่มนี้:

	ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນກາກ	ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ		
	ເງິນແຮສະເພາະສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ ກີບ	ເງິນແຮສະເພາະສຳລັບເງິນກູ້ທີ່ຄວນເອົາໃຈໃສ່ ກີບ	ເງິນແຮທົ່ວໄປສຳລັບເງິນກູ້ປົກກະຕິ ກີບ	ລວມ ກີບ
ຍອດເຫຼືອ ໃນວັນທີ 01 ມັງກອນ 2022	1,080,835,562	1,439,180,247	37,906,011,116	40,426,026,925
ຈັດປະເພດເປັນປົກກະຕິ	55,486,161,772	899,776,151	19,056,417,580	75,442,355,503
ສ່ວນຕ່າງຈາກອັດຕາແລກປ່ຽນ	(24,609,870)	142,101,049	1,275,557,717	1,393,048,896
ຍອດເຫຼືອ ໃນວັນທີ 31 ທັນວາ 2022	**56,542,387,464**	**2,481,057,447**	**58,237,986,413**	**117,261,431,324**

15. ເງິນໃຫ້ກູ້ແກ່ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອ (ຕໍ່)

15.4 ແຮສຳລັບການສູນເສຍເງິນກູ້ໃຫ້ກັບລູກຄ້າ

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ເງິນແຮຕາມລະບຽບການຂອງ ທຫລ ໃນວັນທີ 31 ທັນວາ 2023 ມີດັ່ງນີ້:

ການຈັດຊັ້ນໜີ້	ຍອດເຫຼືອເງິນກູ້ ກີບ	ເງິນແຮສະເພາະ ກີບ	ເງິນແຮທົ່ວໄປ ກີບ
ໜີ້ເກີດດອກອອກຜົນ			
- ໜີ້ປົກກະຕິ	16,423,042,096,015	-	81,649,291,641
- ໜີ້ຄວນເອົາໃຈໃສ່	77,152,655,595	3,904,767,888	-
ໜີ້ບໍ່ເກີດດອກອອກຜົນ			
- ໜີ້ຕ່ຳກວ່າມາດຕະຖານ	191,379,566	444,487,730	-
- ໜີ້ສົງໃສ	21,061,367,000	8,759,705,665	-
- ໜີ້ສູນ	148,448,037,104	18,801,003,210	-
ລວມ	**16,669,895,535,280**	**31,909,964,493**	**81,649,291,641**

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ເງິນແຮຕາມລະບຽບການຂອງ ທຫລ ໃນວັນທີ 31 ທັນວາ 2022 ມີດັ່ງນີ້:

ການຈັດຊັ້ນໜີ້	ຍອດເຫຼືອເງິນກູ້ ກີບ	ເງິນແຮສະເພາະ ກີບ	ເງິນແຮທົ່ວໄປ ກີບ
ໜີ້ເກີດດອກອອກຜົນ	11,690,396,612,566	-	58,237,986,413
- ໜີ້ປົກກະຕິ	87,701,914,919	2,481,057,447	-
- ໜີ້ຄວນເອົາໃຈໃສ່			
ໜີ້ບໍ່ເກີດດອກອອກຜົນ			
- ໜີ້ຕ່ຳກວ່າມາດຕະຖານ	111,824,189,617	22,364,837,442	-
- ໜີ້ສົງໃສ	51,129,734,499	6,225,367,250	-
- ໜີ້ສູນ	95,778,902,772	27,952,182,772	-
ລວມ	**12,036,831,354,373**	**59,023,444,911**	**58,237,986,413**

16. ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ

	2023		2022	
	ມູນຄ່າຕາມບັນຊີ ກີບ	ທະນາຄານຖືຮຸ້ນ %	ມູນຄ່າຕາມບັນຊີ ກີບ	ທະນາຄານຖືຮຸ້ນ %
ບໍລິສັດ ລາວເນເຊີນນໍ ເພເມັ້ນ ເນັດເວີກ ຈຳກັດ (*)	1,697,780,000	5%	1,697,780,000	5%
	1,697,780,000		**1,697,780,000**	

(*) ບໍລິສັດ ລາວເນເຊີນນໍ ເພເມັ້ນ ເນັດເວີກ ຈຳກັດ (LAPNet) ແມ່ນບໍລິສັດຮ່ວມລະຫວ່າງທະນາຄານແຫ່ງ ສປປ ລາວ Union Pay International, ທະນາຄານ ພັດທະນາລາວ, ທະນາຄານສົ່ງເສີມກະສິກຳ, ທະນາຄານການຄ້າ ຕ່າງປະເທດລາວ ມະຫາຊົນ, ທະນາຄານລາວ - ຫວຽດ, ທະນາຄານເອັສທີ.

17. ການກໍ່ສ້າງກຳລັງດຳເນີນ ແລະ ຊັບສິນບັດຄົງທີ່ພວມເຄື່ອນຍ້າຍ

	2023 ກີບ	2022 ກີບ
ຍອດເຫຼືອ ໃນວັນທີ 01 ມັງກອນ	**11,743,465,031**	**8,094,624,961**
- ຊື້ເພີ່ມ	7,790,239,379	20,708,850,933
- ໂອນເຂົ້າເປັນຊັບສິນບັດ	(11,646,872,531)	(17,060,010,863)
ຍອດເຫຼືອ ໃນວັນທີ 31 ທັນວາ	**7,886,831,879**	**11,743,465,031**

18. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

	ສິດນຳໃຊ້ທີ່ດິນ ກີບ	ຊ້ອນແວ ກີບ	ລວມ ກີບ
ວັນທີ 01 ມັງກອນ 2022			
ຕົ້ນທຶນ	168,587,445,042	56,004,413,594	224,591,858,636
ຄ່າເສື່ອມລາຄາສະສົມ	-	(54,211,236,887)	(54,211,236,887)
ມູນຄ່າຕາມບັນຊີສຸດທິ ໃນວັນທີ 31 ທັນວາ 2022	**168,587,445,042**	**1,793,176,707**	**170,380,621,749**
ປີສິ້ນສຸດວັນທີ 31 ທັນວາ 2023			
ຍອດຍົກມາມູນຄ່າຕາມບັນຊີສຸດທິ	168,587,445,042	1,793,176,707	170,380,621,749
ເພີ່ມຂຶ້ນ	953,280,000	20,818,618,456	21,771,898,456
ໂອນຈາກຊັບສິນພວມກໍ່ສ້າງ	-	6,877,876,856	6,877,876,856
ຄ່າເສື່ອມລາຄາ		(13,248,796,333)	(13,248,796,333)
ຍອດເຫຼືອມູນຄ່າຕາມບັນຊີສຸດທິ	**169,540,725,042**	**16,240,875,686**	**185,781,600,728**
ວັນທີ 31 ທັນວາ 2023			
ຕົ້ນທຶນ	169,540,725,042	83,700,908,906	253,241,633,948
ຄ່າເສື່ອມລາຄາສະສົມ	-	(67,460,033,220)	(67,460,033,220)
ມູນຄ່າຕາມບັນຊີສຸດທິ ໃນວັນທີ 31 ທັນວາ 2023	**169,540,725,042**	**16,240,875,686**	**185,781,600,728**

19. ຊັບສິນຄົງທີ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ມີຕົວຕົນ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023 ມີດັ່ງນີ້:

	ອາຄານ ແລະ ການປັບປຸງ ກີບ	ອຸປະກອນ ຫ້ອງການ ກີບ	ເຟີນິເຈີ ແລະ ສິ່ງ ຕິດຕັ້ງ ກີບ	ພາຫະນະ ກີບ	ສິດນຳໃຊ້ທີ່ດິນ ກີບ	ລວມ ກີບ
ວັນທີ 01 ມັງກອນ 2022						
ຕົ້ນທຶນ	66,806,309,686	84,455,162,756	89,711,348,263	16,127,605,657	15,038,268,164	272,138,694,526
ຫັກ: ຄ່າຫຼ້ຍຫ້ຽນສະສົມ	(28,064,600,774)	(43,931,568,745)	(58,899,225,849)	(11,656,978,067)	(4,978,689,070)	(147,531,062,505)
ມູນຄ່າຕາມບັນຊີສຸດທິ ໃນວັນທີ 21 ທັນວາ 2022	**38,741,708,912**	**40,523,594,011**	**30,812,122,414**	**4,470,627,590**	**10,059,579,094**	**124,607,632,021**
ປີສິ້ນສຸດວັນທີ 31 ທັນວາ 2023						
ຍອດຍົກມາມູນຄ່າຕາມບັນຊີສຸດທິ	38,741,708,912	40,523,594,011	30,812,122,414	4,470,627,590	10,059,579,094	124,607,632,021
ເພີ່ມຂຶ້ນ	-	23,679,262,976	15,167,818,496	7,340,173,200	10,146,016,686	56,333,271,358
ໂອນຈາກຊັບສິນພວມກໍ່ສ້າງ	(2,476,974,682)	609,265,185	5,373,127,190	-	-	3,505,417,693
ຫັກ. ມູນຄ່າຕາມບັນຊີສຸດທິ	-	(33,958,376)	(392,447,228)	-	-	(426,405,604)
ຄ່າຫຼ້ຍຫ້ຽນ	(2,044,044,588)	(14,411,488,294)	(10,154,734,315)	(1,781,867,613)	(4,131,079,689)	(32,523,214,499)
ຍອດເຫຼືອມູນຄ່າຕາມບັນຊີສຸດທິ	**34,220,689,642**	**50,366,675,502**	**40,805,886,557**	**10,028,933,177**	**16,074,516,091**	**151,496,700,969**
ວັນທີ 31 ທັນວາ 2023						
ຕົ້ນທຶນ	64,329,335,004	100,996,036,491	108,128,409,860	23,456,278,857	24,953,862,350	321,863,922,562
ຫັກ: ຄ່າຫຼ້ຍຫ້ຽນສະສົມ	(30,108,645,362)	(50,629,360,989)	(67,322,523,303)	(13,427,345,680)	(8,879,346,259)	(170,367,221,593)
ມູນຄ່າຕາມບັນຊີສຸດທິ ໃນວັນທີ 31 ທັນວາ 2023	**34,220,689,642**	**50,366,675,502**	**40,805,886,557**	**10,028,933,177**	**16,074,516,091**	**151,496,700,969**

20. ຊັບສິນອື່ນໆ

	2023 ກີບ	2022 ກີບ
ສາມາດເກັບຄືນພາສີໄດ້ (ບົດອະທິບາຍ 27)	3,031,632,420	3,031,632,420
ເງິນລ່ວງໜ້າບັດເຄດິດຕ່າງປະເທດ	21,455,783,577	679,405,357
ລາຍຈ່າຍຈ່າຍລ່ວງໜ້າລໍຖ້າການແບ່ງສ່ວນ	24,621,505,562	24,692,945,067
ໜີ້ຕ້ອງຮັບຈາກພະນັກງານ (i)	12,818,586,781	10,057,522,475
ຊັບສິນລໍຖ້າການຂາຍ ຫຼື ຖືໄວ້ເພື່ອຂາຍ (ii)	1,188,627,324,300	452,427,304,657
ເງິນຄ້ຳປະກັນ (iiii)	141,094,008,544	46,592,934,993
ອື່ນໆ (iv)	514,781,936,440	254,570,523,342
	1,906,430,777,624	**792,052,268,311**

(i) ສະແດງເຖິງມູນຄ່າເງິນຖືກລັກໂລບທີ່ຄ້າງຮັບຈາກພະນັກງານຂອງທະນາຄານ

(ii) ລວມມີຊັບສິນທີ່ຖືກຍຶດພາຍໃຕ້ຂໍ້ຕົກລົງຂອງລູກຄ້າ.

(iii) ເງິນຄ້ຳປະກັນສຳລັບການບໍລິການບັດ Master ແລະ Visa

(iv) ຈຳນວນດັ່ງກ່າວແມ່ນຈຳນວນເງິນໂອນຍັງບໍ່ທັນສຳເລັດ, ລາຍຈ່າຍລ່ວງໜ້າສຳລັບເຄື່ອງຂຽນ, ຊຸດເຄື່ອງແບບ ແລະ ແຊ່ກທີ່ໄດ້ສົ່ງຄືນ.

21. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ

	2023 ກີບ	2022 ກີບ
ເງິນຝາກກະແສລາຍວັນ	**168,681,974,087**	**20,319,891,308**
ທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ	39,750,127,835	9,072,721,861
ຄັງເງິນແຫ່ງຊາດ	128,931,846,252	11,247,169,447
ເງິນຝາກປະຢັດ	**12,424,485**	**172,680,178**
ທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ	12,424,485	172,680,178
ເງິນຝາກມີກຳນົດ	**543,718,700,000**	**620,041,760,000**
ທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ	543,718,700,000	619,319,400,000
ສະຖາບັນອື່ນໆ	-	722,360,000
ເງິນກູ້ຢືມ	**1,348,310,000,000**	**1,317,435,000,000**
ທະນາຄານ ແຫ່ງ ສປປ ລາວ	1,348,310,000,000	1,317,435,000,000
ໜີ້ຕ້ອງສົ່ງອື່ນໆໃຫ້ທະນາຄານອື່ນ ແລະ ສະຖາບັນການເງິນອື່ນ	**49,377,612**	**756,390,490**
	2,060,772,476,184	**1,958,725,721,976**

21. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ (ຕໍ່)

ອັດຕາດອກເບ້ຍສຳລັບເງິນຝາກຈາກທະນາຄານອື່ນ ແລະ ສະຖາບັນການເງິນອື່ນ ພາຍໃນປີ ມີດັ່ງລຸ່ມນີ້:

	2023 % ຕໍ່ປີ	2022 % ຕໍ່ປີ
ເງິນຝາກກະແສລາຍວັນ	0.00% - 0.50%	0.00% - 0.50%
ເງິນຝາກມີກຳນົດ	3.50% - 7.50%	3.00% - 5.70%
ເງິນຝາກປະຢັດ	1.00%	1.00%

(*) ລາຍລະອຽດຂອງເງິນກູ້ຈາກ ທຫລ ນະວັນທີ 31 ທັນວາ 2023 ມີດັ່ງຕໍ່ໄປນີ້:

ຈຸດປະສົງ	ສະກຸນເງິນ	ໄລຍະເວລາ	ອັດຕາດອກເບ້ຍ % ຕໍ່ປີ	2023 ກີບ
ໂຄງການສິນເຊື່ອແກ້ໄຂໂຄວິດ	ກີບ	6 ປີ	3.00%	887,960,000,000
ໂຄງການສິນເຊື່ອແກ້ໄຂໂຄວິດ	ກີບ	5 ປີ	5.45%+Libor 3 ເດືອນ+ ເລີ່ມຈາກ ເດືອນພະຈິກ 2023, 5.45% + SOFR 3 ເດືອນ	460,355,000,000
				1,348,310,000,000

22. ໜີ້ຕ້ອງສົ່ງໃຫ້ລູກຄ້າ

	2023 ກີບ	2022 ກີບ
ເງິນຝາກກະແສລາຍວັນ	**1,401,592,525,665**	**579,175,866,430**
ເປັນສະກຸນເງິນກີບ	225,061,892,942	100,891,469,081
ເປັນສະກຸນເງິນຕາຕ່າງປະເທດ	1,176,530,632,723	478,284,397,349
ເງິນຝາກປະຢັດ	**3,692,698,094,953**	**2,597,832,239,029**
ເປັນສະກຸນເງິນກີບ	829,362,425,494	720,741,219,347
ເປັນສະກຸນເງິນຕາຕ່າງປະເທດ	2,863,335,669,459	1,877,091,019,682
ເງິນຝາກມີກຳນົດ	**16,772,872,541,661**	**10,963,141,233,017**
ເປັນສະກຸນເງິນກີບ	1,690,139,091,034	1,040,391,146,299
ເປັນສະກຸນເງິນຕາຕ່າງປະເທດ	15,082,733,450,627	9,922,750,086,718
	21,867,163,162,279	**14,140,149,338,476**

22. ໜີ້ຕ້ອງສົ່ງໃຫ້ລູກຄ້າ (ຕໍ່)

ອັດຕາດອກເບ້ຍເງິນພາຍໃນປີຂອງເງິນຝາກດັ່ງກ່າວມີດັ່ງນີ້:

	2023 % ຕໍ່ປີ	2022 % ຕໍ່ປີ
ເງິນຝາກກະແສລາຍວັນ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກປະຢັດສະກຸນເງິນກີບ	0.85% - 3.78%	0.85% - 3.78%
ເງິນຝາກປະຢັດສະກຸນເງິນໂດລາ	0.50% - 3.00%	0.50% - 3.00%
ເງິນຝາກປະຢັດສະກຸນເງິນບາດ	0.50% - 3.00%	0.50% - 3.00%
ເງິນຝາກປະຢັດສະກຸນເງິນຢວນ	0.30% - 0.60%	0.30% - 0.60%
ເງິນຝາກປະຈຳສະກຸນເງິນກີບ	1.50% - 7.98%	0.46% - 12.25%
ເງິນຝາກປະຈຳສະກຸນເງິນຕາຕ່າງປະເທດ	2.00% - 7.50%	0.3% - 10.00%

23. ທຶນຈົດທະບຽນ

	ທຶນຈົດທະບຽນ ກີບ	ອອກຮຸ້ນ ແລະ ທຶນຮຸ້ນ ທີ່ຈ່າຍແລ້ວ ກີບ
ໃນວັນທີ 1 ມັງກອນ 2022	**424,666,100,000**	**404,666,100,000**
ການອອກຮຸ້ນໃໝ່	20,000,000,000	20,000,000,000
ໃນວັນທີ 31 ທັນວາ 2022	**444,666,100,000**	**424,666,100,000**
ໃນວັນທີ 1 ມັງກອນ 2023	**444,666,100,000**	**424,666,100,000**
ການອອກຮຸ້ນໃໝ່	30,000,000,000	20,000,000,000
ໃນວັນທີ 31 ທັນວາ 2023	**474,666,100,000**	**444,666,100,000**

ອີງຕາມແຈ້ງການຈາກ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 132/ກຄທ. ລົງວັນທີ 3 ມີນາ 2023 ທະນາຄານໄດ້ເພີ່ມທຶນຈົດທະບຽນຈາກ 444,666,100,000 ກີບ ເປັນ 474,666,100,000 ກີບ

ອີງຕາມແຈ້ງການຈາກ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 595/ກຄທ. ລົງວັນທີ 21 ມີນາ 2022 ທະນາຄານໄດ້ເພີ່ມທຶນຈົດທະບຽນຈາກ 424,666,100,000 ກີບ ເປັນ 444,666,100,000 ກີບ

ໃນມື້ຂອງການລາຍງານນີ້, ທຶນຈົດທະບຽນຄື 444,666,000,000 ກີບ ເຊິ່ງບໍ່ເປັນໄປຕາມທີ່ກຳນົດໄວ້ຄື 1,000,000,000,000 ກີບ ອີງຕາມດຳລັດ ຈາກທະນາຄານແຫ່ງ ສປປ ລາວ ເລກທີ 095/ທຫລ. ລົງວັນທີ 30 ສິງຫາ 2023 ມີຜົນແຕ່ວັນທີ 15 ກັນຍາ 2023 ເປັນຕົ້ນໄປ. ດຳລັດດັ່ງກ່າວກຳນົດໃຫ້ທະນາຄານທຸລະກິດທັງໝົດໃນ ສປປ ລາວ ເພີ່ມທຶນເປັນ 1,000,000,000,000 ທາງຝ່າຍບໍລິຫານພວມຢູ່ລະຫວ່າງການເຈລະຈາວາງແຜນກັບຜູ້ຖືຮຸ້ນ ແລະ ທະນະຄານແຫ່ງ ສປປ ລາວ ແລະ ເຊື່ອຢ່າງຍິ່ງວ່າ ທະນາຄານສາມາດປະຕິບັດຕາມດຳລັດສະບັບນີ້ໄດ້ໂດຍບໍ່ມີຜົນກະທົບຢ່າງຫຼວງຫຼາຍຕໍ່ທຸລະກິດ.

24. ຄັງສຳຮອງ

ຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງທົ່ວໄປ

	ຄັງສຳຮອງຕາມ ລະບຽບການ ກີບ	ຄັງສຳຮອງທົ່ວໄປ ກີບ	ລວມ ກີບ
